ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ
Lao Securities Commission Office

# ບົດລາຍງານປະຈຳປີ
# ANNUAL REPORT
# 2025




ສ້າງຕະຫຼາດທຶນໃຫ້ກາຍເປັນ ຊ່ອງທາງລະດົມທຶນ ແລະ
ລົງທຶນຢ່າງມີອາຊີບໂປ່ງໃສ່ ແລະ ຍືນຍົງ

## ບົດຄໍາເຫັນຂອງຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ



**ທ່ານ ນາງ ແພງສີ ແພງເມືອງ**

ຕະຫຼາດທຶນ ເປັນອີກໜຶ່ງແຫຼ່ງທຶນ ແລະ ສູນກາງການລະດົມທຶນ ທີ່ມີຄວາມສໍາຄັນຕໍ່ລະບົບເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ ຊຶ່ງຄະນະກໍາມະການຄຸ້ມຄອງຫຼັກຊັບ (ຄຄຊ) ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃນນາມອົງການຄຸ້ມຄອງວຽກງານຫຼັກຊັບ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນ ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງຕິດຕາມກວດກາວຽກງານຫຼັກຊັບ ເພື່ອເຮັດໃຫ້ຕະຫຼາດທຶນຂອງ ສປປ ລາວໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ມີປະສິດທິພາບ, ໜ້າເຊື່ອຖື ແລະ ສອດຄ່ອງກັບມາດຕະຖານສາກົນ ເທື່ອລະກ້າວ.

ໃນປີ 2025 ເສດຖະກິດໂລກຍັງຄົງປະເຊີນກັບສະພາບການທີ່ບໍ່ແນ່ນອນເຊັ່ນດຽວກັບປີທີ່ຜ່ານມາ ຊຶ່ງເປັນຜົນສືບເນື່ອງມາຈາກສະພາບການເສດຖະກິດ, ການເມືອງ ແລະ ຄວາມຂັດແຍ່ງລະຫວ່າງປະເທດທີ່ຍັງບໍ່ທັນສິ້ນສຸດ. ພ້ອມນັ້ນ, ທິດທາງນະໂຍບາຍຂອງທະນາຄານກາງຂອງ ສ. ອາເມລິກາ ໃນແຕ່ລະໄລຍະກໍ່ຍັງຄົງມີບົດບາດ ແລະ ມີອິດທິພົນທີ່ສໍາຄັນຕໍ່ກັບຕະຫຼາດທຶນໃນສາກົນ. ແຕ່ເຖິງຢ່າງໃດກໍ່ຕາມ ບັນດາປະເທດຕ່າງໆ ໂດຍສະເພາະບັນດາປະເທດໃນຂົງເຂດອາຊຽນ ກໍ່ໄດ້ມີຄວາມພະຍາຍາມໃນການແກ້ໄຂ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການເງິນ ແລະ ຕະຫຼາດທຶນ ດ້ວຍຄວາມຮ່ວມມືຂອງກຸ່ມປະເທດ ອາຊຽນ ໂດຍຜ່ານ The ASEAN Capital Market Forum (ACMF) ທີ່ເປັນຂົດໝາຍ, ຄວາມຮ່ວມມື ແລະ ຄວາມພະຍາຍາມຂອງກຸ່ມປະເທດສະມາຊິກອາຊຽນທີ່ຈະສູ້ຊົນ ແລະ ເຕີບໂຕໄປພ້ອມກັນໃນສະພາບການເສດຖະກິດໂລກທີ່ມີຄວາມບໍ່ແນ່ນອນ.

ສໍາລັບ ສປປ ລາວ ໄດ້ສືບຕໍ່ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຂຶ້ນຂ້ຽວຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ, ເວົ້າສະເພາະຢູ່ໃນຂະແໜງຕະຫຼາດທຶນຂອງພວກເຮົາ ກໍ່ພວມສຸມໃສ່ຜັນຂະຫຍາຍຈັດຕັ້ງປະຕິບັດບັນດາແຜນງານ-ໂຄງການ ການພັດທະນາຕະຫຼາດທຶນ ໃນປີ 2025 ບົນພື້ນຖານການຊີ້ນໍາ-ນໍາພາຢ່າງໃກ້ສິດຈາກ ຄະນະກໍາມະການຄຸ້ມຄອງຫຼັກຊັບ ໂດຍສົມທົບກັບບັນດາຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ.

ໃນປີ 2025 ວຽກງານສີຂຽວຍັງຄົງມີທ່າແຮງ ແລະ ມີບົດບາດສໍາຄັນທັງໃນພາກພື້ນ ແລະ ສາກົນ ໂດຍສະເພາະການຍົກສູງການແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ, ການຮັກສາສິ່ງແວດລ້ອມ ແລະ ການລົງທຶນທີ່ເປັນມິດຕໍ່ກັບສິ່ງແວດລ້ອມ ແລະ ສັງຄົມ. ບັນດາປະເທດໃນຂອບເຂດອາຊຽນ ກໍ່ໄດ້ສຸມໃສ່ຄົ້ນຄວ້າວຽກງານທີ່ກ່ຽວຂ້ອງກັບການເງິນສີຂຽວ ຄື: ການອອກບັນດາມາດຖານຂອງພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ ແລະ ວຽກງານຂອງຕະຫຼາດສິນເຊື່ອກາກບອນ ທີ່ຄາດວ່າຈະເປັນທ່າແຮງສໍາຄັນໃນການຫຼຸດຜ່ອນຜົນກະທົບ ແລະ ຮັກສາສິ່ງແວດລ້ອມ ຄຽງຄູ່ກັບການເສີມສ້າງຄວາມເຂັ້ມແຂງຂອງບັນດາປະເທດ ສະມາຊິກອາຊຽນ.

ການພັດທະນາຕະຫຼາດທຶນໃນປີ 2025 ນັບເປັນປີໜຶ່ງທີ່ມີຄວາມຄຶກຄັກ ແລະ ມີຄວາມໂດດເດັ່ນຂອງຕະຫຼາດທຶນລາວ ໂດຍສະເພາະການເຄື່ອນໄຫວຊື້ຂາຍຫຼັກຊັບໃນຕະຫຼາດຂັ້ນສອງ ທີ່ນັກລົງທຶນເຄື່ອນໄຫວຊື້ຂາຍກັນຈໍານວນຫຼາຍ ແລະ ເປັນປີທີ່ມີມູນຄ່າການຊື້ຂາຍສູງສຸດໃນຮອບ 15 ປີ ຈາກການເຂົ້າຈົດທະບຽນຂອງ ທະນາຄານຮ່ວມພັດທະນາມະຫາຊົນ (JDB) ແລະ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ທີ່ໄດ້ເສີມສ້າງຄວາມເຊື່ອໃຈ ແລະ ດຶງດູດການລົງທຶນໃນຕະຫຼາດຫຼັກຊັບລາວ ໃຫ້ມີຄວາມຄຶກຄັກກວ່າທີ່ຜ່ານມາ. ໂດຍສະເພາະການເຄື່ອນໄຫວຂອງຮຸ້ນ BCEL ທີ່ມີນັກລົງທຶນພາຍໃນໃຫ້ຄວາມສົນໃຈ ແລະ ເຂົ້າຊື້ຂາຍຮຸ້ນ ໄດ້ກາຍເປັນປັດໃຈໜຶ່ງໃນການຊຸກຍູ້ການເຄື່ອນໄຫວຕະຫຼາດທຶນລາວ ໃຫ້ມີຄວາມຄຶກຄັກໃນປີ 2025. ຄະນະກໍາມະການຄຸ້ມຄອງຫຼັກຊັບ ໂດຍສົມທົບກັບບັນດາຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານຕາມແຜນພັດທະນາຕະຫຼາດທຶນ ໂດຍລັດຖະບານໄດ້ຮັບຮອງ ແລະ

ປະກາດໃຊ້ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2045; ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈຳນວນ 09 ສະບັບ, ສຳລັບການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ເຫັນວ່າ ມີປະສິດທິພາບ ແລະ ສາມາດສະກັດກັ້ນການກະທຳຜິດ ໂດຍໄດ້ປະຕິບັດມາດຕະການປັບໃໝ ຕໍ່ບໍລິສັດຈົດທະບຽນ ຈຳນວນ 2 ກໍລະນີ. ພ້ອມນັ້ນ, ສຄຄຊ ໄດ້ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອຄົ້ນຄວ້າປະຕິບັດມາດຕະການຕໍ່ກັບ ບໍລິສັດທີ່ເຄື່ອນໄຫວນອກວັດຖຸປະສົງ 2 ແຫ່ງ.

ດ້ານການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນປີ 2025 ໄດ້ສຳເລັດການອະນຸຍາດໃຫ້ບໍລິສັດອອກຈຳໜ່າຍຮຸ້ນຄັ້ງທຳອິດ (IPO) ແລະ ອອກຮຸ້ນເພີ່ມທຶນ. ໃນນັ້ນ, ໄດ້ອະນຸຍາດໃຫ້ບໍລິສັດອອກຈຳໜ່າຍຮຸ້ນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ປະກອບມີ: ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ແລະ ທະນາຄານ ຮ່ວມພັດທະນາ ມະຫາຊົນ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ; ໄດ້ອະນຸຍາດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ສີຂຽວ, ສັງຄົມ ແລະ ຍືນຍົງ ຈຳນວນ 2 ກໍລະນີ ຄື: ບໍລິສັດ ໂລກ້າ ຈຳກັດ ແລະ ທະນາຄານສົ່ງເສີມກະສິກຳ. ຍອດສະສົມການລະດົມທຶນ ທັງພາຍໃນ ແລະ ຕ່າງປະເທດ ໄດ້ກວມເອົາ 10.56% ຂອງ GDP ຄິດເປັນມູນຄ່າ 67,815.55 ຕື້ກີບ. ສຳລັບການອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ຮອດປີ 2025 ມີມູນຄ່າ 10,724.09 ຕື້ກີບ.

ດ້ານການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ໄດ້ສຳເລັດ ການຮັບຮອງ ແລະ ຕໍ່ອາຍຸສະຖາບັນສື່ກາງດ້ານຫຼັກຊັບອື່ນໆ, ສຳເລັດການຕໍ່ອາຍຸໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ, ນັກກວດສອບ ແລະ ຜູ້ປະເມີນມູນຄ່າຊັບສິນ. ພ້ອມທັງ, ສຳເລັດການຄົ້ນຄວ້າກຳນົດຜູ້ຄຸ້ມຄອງຫຼັກບໍລິສັດປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ. ພ້ອມນັ້ນ, ໄດ້ສົມທົບກັບ ຕລຊລ ແລະ ບໍລິສັດຫຼັກຊັບ ເພື່ອຊຸກຍູ້ການສ້າງຕັ້ງສະມາຄົມຕະຫຼາດທຶນລາວ, ສຳເລັດການພັດທະນາລະບົບການຊື້ຂາຍຫຼັກຊັບ ຜ່ານມືຖື (Mobile Trading System) ແລະ ຊ່ອງທາງການເປີດບັນຊີຫຼັກຊັບຜ່ານທາງອອນລາຍສຳລັບຜູ້ລົງທຶນພາຍໃນ. ພ້ອມທັງ, ໄດ້ສຳເລັດການຄົ້ນຄວ້າວຽກງານຄ້ຳປະກັນສິນເຊື່ອ (Credit Guarantee). ຄຽງຄູ່ກັນນີ້, ສຄຄຊ ໄດ້ສືບຕໍ່ໃຫ້ຄວາມສຳຄັນໃນການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ໂດຍໄດ້ພັດທະນາເນື້ອໃນ ແລະ ຮູບແບບ ການຝຶກອົບຮົມ ແລະ ການໂຄສະນາເພື່ອໃຫ້ແທດເໝາະກັບກຸ່ມເປົ້າໝາຍຫຼາຍຍິ່ງຂຶ້ນ ຊຶ່ງໄດ້ສຳເລັດການຈັດຕັ້ງ 8 ຄັ້ງ, ສຳເລັດການສ້າງຫຼັກສູດຝຶກອົບຮົມ ຈຳນວນ 4 ຫຼັກສູດ, ສຳເລັດການສ້າງສື່ໂຄສະນາຕ່າງໆ 18 ຫົວຂໍ້.

ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາການ ສຄຄຊ ໄດ້ເພີ່ມທະວີການຮ່ວມມືໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ, ໄດ້ສຳເລັດການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າແບບສາມຝ່າຍ ສສ. ຫວຽດນາມ, ລຸກຊຳບວກ ແລະ ສປປ ລາວ (Lao/032). ພ້ອມທັງ, ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດໂຄງການ 3 ປີ ໃນວຽກງານຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ຂອງ ສຄຄຊ. ພ້ອມນີ້, ໄດ້ຈັດກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມຈຳນວນ 7 ຄັ້ງ; ເຜີຍແຜ່ບັນດາລະບຽບການໃຫ້ບໍລິສັດຈົດທະບຽນ 3 ຄັ້ງ; ກອງປະຊຸມເສວະນາ (Panel Discussion) ແລະ ກອງປະຊຸມໂຕະມົນເພື່ອປຶກສາຫາລືກ່ຽວກັບວຽກງານຫຼັກຊັບ 2 ຄັ້ງ, ຊຶ່ງເຮັດໃຫ້ບຸກຄະລາກອນໃນວຽກງານຕະຫຼາດທຶນ ສາມາດຖອດຖອນບົດຮຽນ ເພື່ອນຳມາປັບປຸງນິຕິກຳ ແລະ ສ້າງແນວທາງໃນການຄຸ້ມຄອງວຽກງານຫຼັກຊັບໃຫ້ສອດຄ່ອງກັບມາດຕະຖານສາກົນເທື່ອລະກ້າວ.

ສຳລັບທິດທາງແຜນການໃນປີ 2026 ສຄຄຊ ຈະສຸມໃສ່ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ, ສົມທົບກັບກະຊວງກ່ຽວຂ້ອງໃນການຄົ້ນຄວ້າລາຍຊື່ເປົ້າໝາຍບໍລິສັດທີ່ເປັນບູລິມະສິດ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ, ຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ວິສາຫະກິດທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ. ນອກຈາກນັ້ນ, ຍັງຈະໄດ້ສືບຕໍ່ຊຸກຍູ້ບໍລິສັດຫຼັກຊັບ ແລະ ຕລຊລ ໃນການຄົ້ນຄວ້າພັດທະນາລະບົບການຊື້ຂາຍຫຼັກຊັບ ຜ່ານມືຖື (Mobile Trading System). ພ້ອມທັງ, ສືບຕໍ່ຮ່ວມມືໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ຢ່າງເປັນປົກກະຕິ ເພື່ອ

ຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ແລະ ກະກຽມຄວາມພ້ອມໃນການເຂົ້າເປັນສະມາຊິກສົມບູນຂອງ IOSCO ໃນຕໍ່ໜ້າ.

# ສະຖິຕິສຳຄັນໃນປີ 2025




ປີ 2025 ໄດ້ສ້າງ ແລະ ປັບປຸງນິຕິກຳ 9 ສະບັບ ປະກອບມີ: ຂໍ້ຕົກລົງ 1 ສະບັບ, ແຈ້ງການ 3 ສະບັບ ແລະ ຄຳແນະນຳ 2 ສະບັບ ແລະ ຂໍ້ຕົກລົງ 3 ສະບັບ (ປະຈຸບັນ ສຄຄຊ ມີນິຕິກຳທັງໝົດ 109 ສະບັບ)





ໃນປີ 2025 ນັກວິຊາຊີບທັງໝົດ **78 ຄົນ** ປະກອບມີ:

- ນັກວິຊາຊີບທຸລະກິດຫຼັກຊັບ 23 ຄົນ (ທີ່ປຶກສາທາງດ້ານການເງິນ 10 ຄົນ, ນາຍໜ້າຊື້ຂາຍຫຼັກຊັບ 7 ຄົນ, ຜູ້ວິເຄາະຫຼັກຊັບ 2 ຄົນ, ຜູ້ຄ້າຫຼັກຊັບ 3 ຄົນ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ 1 ຄົນ);
- ນັກວິຊາຊີບກວດສອບ 23 ຄົນ;
- ນັກວິຊາຊີບປະເມີນມູນຄ່າຊັບສິນ 32 ຄົນ.

- ປີ 2025 ມີບໍລິສັດຈົດທະບຽນ ທັງໝົດມີ **12** ແຫ່ງ;
- ຍອດສະສົມການລະດົມທຶນຜ່ານການອອກຫຼັກຊັບ (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດ) ທັງພາຍໃນ ແລະ ຕ່າງປະເທດ ຮອດປັດຈຸບັນ: **67,815.55 ຕື້ກີບ**;
- ການອອກຈຳໜ່າຍພັນທະບັດ ຜ່ານ ຕະຫຼາດຫຼັກຊັບ: **10,724.09 ຕື້ກີບ; ມີຜູ້ຊື້ພັນທະບັດ ຈຳນວນ 419 ລາຍ, 26,518,650 ຫົວໜ່ວຍ;**
- ແຍກເປັນ 1,074.29 ຕື້ກີບ; 56,217,000 ໂດລາ; 491,779,900 ຢວນ ແລະ 10,295,748,000 ບາດ.



ບັນຊີຜູ້ລົງທຶນທັງໝົດໃນປີ 2025 **ເພີ່ມຂຶ້ນ 8,541 ບັນຊີ** (ທັງໝົດມີ **25,625 ບັນຊີ** ຄື: ພາຍໃນ 21,946 ບັນຊີ ຕ່າງປະເທດ 8,849 ບັນຊີ).





- ບໍລິສັດຫຼັກຊັບ **4 ແຫ່ງ;**
- ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ **2 ແຫ່ງ;**
- ບໍລິສັດກວດສອບ **4 ແຫ່ງ;**
- ບໍລິສັດປະເມີນມູນຄ່າຊັບສິນ **12 ແຫ່ງ;**
- ທະນາຄານດູແລຊັບສິນ **5 ແຫ່ງ;**
- ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື **2 ແຫ່ງ;**

- ມູນຄ່າການຊື້ຂາຍໃນປີ 2025 ແມ່ນ **216.76 ຕື້ກີບ;**
- (ທັງໝົດນັບແຕ່ເປີດຕະຫຼາດມີ 256.22 **ຕື້ກີບ ເພີ່ມຂຶ້ນ; 724.51% ທຽບໃສ່ປີ 2024**;
- ມູນຄ່າຕະຫຼາດໃນທ້າຍປີ 2023 ແມ່ນ **24,502.14 ຕື້ກີບ**;
- ດັດຊະນີຫຼັກຊັບທ້າຍປີ 2025 ປິດຢູ່ທີ່ **1,246.89 ຈຸດ.**




- ປະຕິບັດມາດຕະການປັບໃໝ **1 ກໍລະນີ ແລະ ຕັກເຕືອນ 1 ກໍລະນີ.**

# ສາລະບານ

**ຫົວຂໍ້** **ໜ້າ**

**I. ສະພາບຕະຫຼາດທຶນ ໃນປີ 2025 .... 1**
**1. ສະພາບຕະຫຼາດທຶນຂອງຕ່າງປະເທດ .... 1**
**2. ສະພາບຕະຫຼາດທຶນຂອງ ສປປ ລາວ (ຕລຊລ) .... 1**
**II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2025 .... 2**
**1. ອົງການຄຸ້ມຄອງວຽກງານຫຼັກຊັບ .... 2**
1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) .... 2
1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ .... 3
**2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2025 .... 5**
2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ .... 5
2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ .... 6
2.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ .... 8
2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ .... 10
2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ .... 11
2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ .... 12
2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ .... 12
2.8 ການຮ່ວມມືສາກົນ .... 15
**III. ທິດທາງແຜນການ ປີ 2026 .... 18**
**1. ຄາດຄະເນສະພາບຕະຫຼາດທຶນຂອງຕ່າງປະເທດ .... 18**
**2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ .... 18**
**3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2026** .... 18
3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ .... 18
3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ .... 19
3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ .... 19
3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ .... 19
3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ .... 20
3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ .... 20
3.7 ການຮ່ວມມືສາກົນ .... 21

# I. ສະພາບຕະຫຼາດທຶນ ໃນປີ 2025

## 1. ສະພາບຕະຫຼາດທຶນຂອງຕ່າງປະເທດ

ໃນປີ 2025 ເປັນປີທີ່ຕະຫຼາດທຶນຕ່າງປະເທດຍັງໄດ້ຮັບແຮງກົດດັນຈາກ ຂໍ້ຂັດແຍ່ງລະຫວ່າງ ປະເທດລັດເຊຍ ແລະ ຢູເຄຣນ. ລວມທັງ, ສະຖານະການສົງຄາມໃນຕາເວັນອອກກາງທີ່ເລີ່ມສົ່ງສັນຍານຄວາມກັງວົນໃຫ້ແກ່ຕະຫຼາດທຶນ, ລວມໄປເຖິງສະຖານະການການເມືອງໃນຕ່າງປະເທດ, ເສດຖະກິດໂລກ, ພາວະເງິນເຟີ້, ນະໂຍບາຍຂອງປະທານາທິບໍດີ ທັມ ແລະ ສັນຍານຈາກທະນາຄານກາງ ສ. ອາເມລິກາ (FED) ທີ່ມີອິດທິພົນກະທົບຕະຫຼາດທຶນສາກົນໃນແຕ່ລະໄລຍະ. ໃນຂະນະດຽວກັນ ອຸດສາຫະກຳທາງດ້ານນະວັດຕະກຳປັນຍາປະດິດ (AI) ກາຍເປັນສິ່ງທີ່ໂດດເດັ່ນ ແລະ ມີອິດທິພົນໃນຫຼາຍດ້ານຕໍ່ກັບທິດທາງ ແລະ ສະພາບການເຄື່ອນໄຫວຂອງຕະຫຼາດທຶນສາກົນ.

## 2. ສະພາບຕະຫຼາດທຶນຂອງ ສປປ ລາວ (ຕລຊລ)

ຕະຫຼາດທຶນລາວໃນປີ 2025 ເປັນປີທີ່ມີການເຕີບໂຕຢ່າງໂດດເດັ່ນໃນຮອບ 15 ປີ ຈາກການເຂົ້າຈົດທະບຽນຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ເສີມສ້າງຄວາມເຊື່ອໃຈ ແລະ ດຶງດູດການລົງທຶນໃນຕະຫຼາດຫຼັກຊັບລາວ ໃນປີ 2025 ໃຫ້ມີຄວາມຄຶກຄັກກວ່າທີ່ຜ່ານມາ. ນອກຈາກນີ້, ການຊື້ຂາຍຮຸ້ນ BCEL ຂອງຜູ້ລົງທຶນພາຍໃນ ຫຼັງຈາກທີ່ບໍລິສັດໄດ້ປັບຖານລາຄາໃໝ່ ໂດຍມີນັກລົງທຶນພາຍໃນໃຫ້ຄວາມສົນໃຈ ແລະ ເຂົ້າຊື້ຈຳນວນຫຼາຍ ເຮັດໃຫ້ມູນຄ່າການຊື້ຂາຍຂອງຕະຫຼາດທຶນລາວ ເພີ່ມສູງຂຶ້ນດ້ວຍມູນຄ່າສູງເຖິງ 254.30 ຕື້ກີບ (ຮອງຈາກປີ 2011 ເຊິ່ງເປັນປີເປີດຕະຫຼາດ) ປັດໃຈນີ້ກໍ່ຊ່ວຍໃຫ້ພາບລວມຂອງຕະຫຼາດທຶນລາວໃນປີນີ້ມີຄວາມພົ້ນເດັ່ນຫຼາຍຂຶ້ນ.

ການເພີ່ມຂຶ້ນຂອງມູນຄ່າການຊື້ຂາຍຂອງ ຕະຫຼາດທຶນລາວ ເປັນສັນຍານທີ່ດີທີ່ສະແດງໃຫ້ເຫັນເຖິງສະພາບຂອງ ຕລຊລ ບໍ່ໄດ້ຮັບຜົນກະທົບສະແດງໃຫ້ເຫັນວ່າ ຕະຫຼາດຫຼັກຊັບລາວ ຍັງສາມາດຮັກສາສະຖຽນລະພາບໄດ້ດີທ່າມກາງຄວາມຜັນຜວນຂອງຕະຫຼາດທຶນສາກົນ ຊຶ່ງສະແດງໃຫ້ເຫັນຈາກສະພາບການເຄື່ອນໄຫວຂອງລາຄາ ແລະ ມູນຄ່າການຊື້ຂາຍທີ່ເພີ່ມຂຶ້ນສູງໃນໄລຍະເວລາທີ່ສາກົນມີຄວາມອ່ອນໄຫວຕໍ່ບັນດາປັດໃຈທີ່ກະທົບ. ເຖິງສະພາບການຈະເປັນແນວນັ້ນກໍ່ຕາມ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍ່ຍັງຄົງເອົາໃຈໃສ່ ແລະ ຕິດຕາມ ພຶດຕິກຳການເຄື່ອນໄຫວຊື້ຂາຍຫຼັກຊັບຢ່າງໃກ້ຊິດ ເພື່ອຮັບປະກັນໃຫ້ເກີດການຊື້ຂາຍ ທີ່ຍຸດຕິທຳ.

ຄຽງຄູ່ກັນນີ້, ເພື່ອເປັນການພັດທະນາຕະຫຼາດທຶນ ກໍ່ຄື ເສດຖະກິດຂອງ ສປປ ລາວ, ສຄຄຊ ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ສ້າງ ແລະ ປັບປຸງກົນໄກຂອງຕະຫຼາດທຶນ. ພ້ອມນີ້, ສຄຄຊ ຍັງໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງຊ່ອງທາງເອື້ອອຳນວຍການຊື້ຂາຍ ພັນທະບັດລັດຖະບານຜ່ານຕະຫຼາດທຶນໃຫ້ຫຼາຍຍິ່ງຂຶ້ນ.

## II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2025

### 1. ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ຄຄຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ ແລະ ຍຸຕິທຳ. ການເຄື່ອນໄຫວໃນໄລຍະໜຶ່ງປີຜ່ານມາ ຄຄຊ ໄດ້ກຳນົດແນວທາງໃນການຄຸ້ມຄອງ, ພິຈາລະນາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງເອກະສານ ແລະ ຜ່ານການຈັດກອງປະຊຸມຄົບຄະນະຂອງຄະນະກຳມະການຄຸ້ມຄອງຫຼັກຊັບ 03 ຄັ້ງ ເພື່ອພິຈາລະນາບາງບັນຫາທີ່ພົ້ນເດັ່ນ ແລະ ກຳນົດທິດທາງການຈັດຕັ້ງປະຕິບັດວຽກງານຈຸດສຸມໃນແຕ່ລະໄລຍະ. ຈັດພິທີສະຫຼຸບຜົນງານ ຕະຫຼາດທຶນລາວ ຄົບຮອບ 15 ປີ; ສ້າງແຜນຍຸດທະສາດການພັດທະນາຕະຫຼາດທຶນ 10 ປີ (2026-2035) ແລະ ວິໄສທັດຮອດປີ 2045. ພ້ອມນີ້, ປັດຈຸບັນໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີ 11 ທ່ານ (ຕາມຮູບພາບ 1).

**ຮູບພາບ 1: ໂຄງປະກອບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ**



### 1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສຄຄຊ ປະຕິບັດພາລະບົດບາດໃນການເປັນກົງຈັກຊ່ວຍວຽກໃຫ້ແກ່ຄະນະ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃນ ສປປ ລາວ ຢ່າງລວມສູນ ເຊິ່ງໃນໄລຍະໜຶ່ງປີຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດວຽກງານຄຸ້ມຄອງຫຼັກຊັບດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຫຼາຍດ້ານ. ຄຽງຄູ່ກັນນີ້, ຄະນະ ສຄຄຊ ກໍ່ໄດ້ຮັບການປັບປຸງເພື່ອຊີ້ນຳ-ນຳພາໃຫ້ມີຄວາມສອດຄ່ອງຕາມເງື່ອນໄຂໃນໄລຍະໃໝ່ ໂດຍໄດ້ສຳເລັດການປະເມີນຜົນລັດຖະກອນໃໝ່ 95 ບັນຈຸເຂົ້າເປັນພະນັກງານສົມບູນ ຈຳນວນ 1 ທ່ານ ພ້ອມທັງ ຮັບພະນັກງານທົດສອບວຽກ 2 ທ່ານ ຕາມວິຊາສະເພາະຢ່າງເໝາະສົມ. ຮອດປັດຈຸບັນ, ສຄຄຊ ມີພະນັກງານທັງໝົດ 48 ທ່ານ (ຍິງ 25 ທ່ານ), ໃນນີ້ປະກອບດ້ວຍ ຄະນະ ສຄຄຊ 3 ທ່ານ (ຍິງ 2 ທ່ານ), ຄະນະພະແນກ 15 ທ່ານ (ຍິງ 06 ທ່ານ), ວິຊາການ 30 ທ່ານ (ຍິງ 16 ທ່ານ), ພະນັກງານລັດຖະກອນ 95 ຈຳນວນ 02 ທ່ານ ແລະ ພະນັກງານຕາມສັນຍາ 1 ທ່ານ (ຍິງ 01 ທ່ານ).

**ຮູບພາບ 2: ໂຄງປະກອບບຸກຄະລາກອນ ຂອງ ຄະນະ ສຄຄຊ**



**ຮູບພາບ 3: ໂຄງປະກອບບຸກຄະລາກອນ ຂອງ ສຄຄຊ**




**ຮູບພາບ 4: ພະນັກງານ ຂອງ ສຄຄຊ**



## 2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2025

ໃນປີ 2025 ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານວິຊາສະເພາະຂອງຕົນຢ່າງຕັ້ງໜ້າ ໂດຍປະຕິບັດຕາມແຜນງານ, ໂຄງການ, ໜ້າວຽກທີ່ກຳນົດໄວ້ ພ້ອມທັງ ມີການຕິດຕາມ, ປະເມີນ ແລະ ຖອດຖອນບົດຮຽນຕໍ່ການເຄື່ອນໄຫວວຽກງານຢ່າງໃກ້ຊິດ ເຮັດໃຫ້ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ຊຶ່ງສາມາດສັງລວມລາຍລະອຽດໄດ້ດັ່ງນີ້:

### 2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

### 2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ບົນພື້ນຖານການສົມທົບກັບພາກສ່ວນກ່ຽວຂ້ອງ ສຄຄຊ ໄດ້ສຳເລັດ ການປັບປຸງຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2026-2035) ແລະ ວິໄສທັດຮອດປີ 2045. ນອກຈາກນັ້ນ, ສຄຄຊ ຍັງໄດ້ສຳເລັດການຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ທັງໝົດຈຳນວນ 9 ສະບັບ ປະກອບມີ: ຂໍ້ຕົກລົງ 1 ສະບັບ, ແຈ້ງການ 3 ສະບັບ, ດຳລັດ 1 ສະບັບ, ຂໍ້ຕົກລົງ 2 ສະບັບ ແລະ ຄຳແນະນຳ 2 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບໃນແຕ່ລະໄລຍະ. ອັນທີ່ພົ້ນເດັ່ນ ມີດັ່ງລຸ່ມນີ້:

**ຕາຕະລາງທີ 1: ສັງລວມລາຍຊື່ນິຕິກຳທີ່ສຳເລັດໃນປີ 2025**

| ລຳດັບ | ລາຍຊື່ນິຕິກຳ ທີ່ສຳເລັດ ໃນປີ 2025 |
|---|---|
| 1 | ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄຄຊ |
| 2 | ຂໍ້ຕົກລົງ ວ່າດ້ວຍການສ້າງສະພາບຄ່ອງໃນຕະຫຼາດຫຼັກຊັບລາວ |
| 3 | ຂໍ້ຕົກລົງ ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ |
| 4 | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສະມາຄົມວຽກງານຫຼັກຊັບ |
| 5 | ຄຳແນະນຳ ວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນ |
| 6 | ຄຳແນະນຳ ວ່າດ້ວຍການກວດກາວຽກງານການເງິນ |
| 7 | ແຈ້ງການ ກ່ຽວກັບການກຳນົດເວລາ ແລະ ການສິ້ນສຸດຂອງ ສັນຍາກວດສອບ |
| 8 | ແຈ້ງການ ກ່ຽວກັບການຍົກເວັ້ນຄ່າບໍລິການໃນການອອກຈຳໜ່າຍ ຮຸ້ນກູ້ສີຂຽວ, ສັງຄົມ ແລະ ຍືນຍົງ ຢູ່ ສປປ ລາວ |
| 9 | ແຈ້ງການກ່ ຽວກັບການອະນຸຍາດໃຫ້ສືບຕໍ່ເປີດການຂໍຮັບຮອງເປັນ ບໍລິສັດປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ |

ຮອດປັດຈຸບັນ, ນິຕິກຳໃນຂົງເຂດວຽກງານຫຼັກຊັບ ປະກອບມີ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ນິຕິກຳໃຕ້ກົດໝາຍສະບັບດັ່ງກ່າວ ທັງໝົດ 109 ສະບັບ.

### 2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຕະຫຼາດທຶນ, ສຄຄຊ ໄດ້ປະກອບສ່ວນເຂົ້າຮ່ວມການຄົ້ນຄວ້ານະໂຍບາຍມະຫາພາກຢ່າງຕັ້ງໜ້າ ໂດຍໄດ້ປະກອບສ່ວນໃນຄະນະສະເພາະກິດ ສ້າງ ແລະ ປັບປຸງນິຕິກຳຮ່ວມກັບ ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ຕະຫຼອດປີ, ໄດ້ເຂົ້າຮ່ວມກອງປະຊຸມທາບທາມ ແລະ ຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍອາກອນລາຍໄດ້ ຢູ່ຫຼາຍແຂວງ ເຊັ່ນ: ແຂວງຈຳປາສັກ, ແຂວງສະຫວັນນະເຂດ (ນະຄອນໄກສອນ ພົມວິຫານ) ແລະ ແຂວງວຽງຈັນ (ເມືອງວັງວຽງ) ເພື່ອປະກອບຄຳເຫັນເຂົ້າໃນນະໂຍບາຍອາກອນທີ່ສະໜັບສະໜູນວຽກງານຫຼັກຊັບ. ພ້ອມດຽວກັນນັ້ນ, ຍັງໄດ້ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ (ຮ່າງ) ດຳລັດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂວິກິດການລະບົບການເງິນ ທີ່ກ່ຽວຂ້ອງກັບມະຫາພາກ.

## 2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກ ຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

❖ **ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ**

ໃນປີ 2025 ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ ຢ່າງເປັນປົກກະຕິ ທີ່ພົ້ນເດັ່ນແມ່ນ ໄດ້ອະນຸຍາດໃຫ້ບໍລິສັດອອກຈຳໜ່າຍຮຸ້ນຄັ້ງທຳອິດ, ອອກຮຸ້ນເພີ່ມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຈຳນວນ 3 ກໍລະນີ ໃນນັ້ນອອກຮຸ້ນຄັ້ງທຳອິດ 2 ກໍລະນີ ແລະ ອອກຮຸ້ນເພີ່ມທຶນ 1 ກໍລະນີ ປະກອບມີ: 1) ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, 2) ທະນາຄານ ຮ່ວມພັດທະນາ ມະຫາຊົນ ແລະ 3) ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ; ໄດ້ອະນຸຍາດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ 1 ກໍລະນີ ຄື: ບໍລິສັດ ໄຊຍະບູລີ ພາວເວີ ຈຳກັດ. ນອກນັ້ນ, ຍັງໄດ້ຄົ້ນຄວ້າ ກ່ຽວກັບການສະເໜີຂໍອອກຈຳໜ່າຍຮຸ້ນກູ້ສີຂຽວ, ສັງຄົມ ແລະ ຍືນຍົງ ຈຳນວນ 2 ກໍລະນີ ຄື: ບໍລິສັດ ໂລກ້າ ຈຳກັດ ແລະ ທະນາຄານສົ່ງເສີມກະສິກຳ. ພ້ອມດຽວກັນນັ້ນ, ສຄຄຊ ຍັງໄດ້ ຈັດກອງປະຊຸມປຶກສາຫາລື ກ່ຽວກັບການຫັນວິສາຫະກິດລັດລົງທຶນ ຜ່ານກົນໄກຕະຫຼາດທຶນ ຮ່ວມກັບກົມຄຸ້ມຄອງວິສາຫະກິດລັດລົງທຶນ ກະຊວງການເງິນ ແລະ ຕະຫຼາດຫຼັກຊັບລາວ, ຄົ້ນຄວ້າ ແລະ ຈັດລຽງບູລິມະສິດການຫັນລັດວິສາຫະກິດ ໂດຍນຳໃຊ້ກົນໄກຕະຫຼາດທຶນ; ແຈ້ງຕອບກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການປະກອບຄຳເຫັນຕໍ່ການສະເໜີຂໍດັດແກ້ໃບທະບຽນສຳປະທານຂອງ ບໍລິສັດລາວເວີນຈຳກັດ.

**ຕາຕະລາງທີ 2: ສັງລວມການລະດົມທຶນຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2025.**

| ປີ | ລະດົມທຶນ (ຕື້ກີບ) | ລະດົມທຶນ ຢູ່ຕ່າງປະເທດ (ຕື້ກີບ) | ລວມ (ຕື້ກີບ) |
|---|---|---|---|
| 2010 | 1,237 | - | 1,237 |
| 2012 | 1,611 | - | 1,611 |
| 2013 | 40 | - | 40 |
| 2014 | 240 | 1,625 | 1,865 |
| 2015 | 2,832 | - | 2,832 |
| 2016 | - | 2,558 | 2,558 |

| | | | |
|---|---|---|---|
| 2017 | 458 | 1,500 | 1,958 |
| 2018 | 69 | 5,349 | 5,418 |
| 2019 | 332 | 1,620 | 1,952 |
| 2020 | - | 494 | 494 |
| 2021 | - | 1,922 | 1,922 |
| 2022 | - | 4,219 | 4,219 |
| 2023 | 53 | 3,988 | 4,041 |
| 2024 | - | - | - |
| 2025 | 1,513 | 2,697 | 4,210 |
| **ລວມ** | 8,384 | 25,973 | 34,357 |

ໂດຍລວມແລ້ວ, ນັບແຕ່ປີ 2010 - 2025 ຍອດສະສົມການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຕ່າງປະເທດ ລວມທັງໝົດ 67,815.55 ຕື້ກີບ ກວມເອົາ 21% ຂອງ GDP 2024 ເຊິ່ງທຶນດັ່ງກ່າວ ໄດ້ນຳໃຊ້ເຂົ້າໃນການຂະຫຍາຍທຸລະກິດ ເປັນຕົ້ນແມ່ນ ສ້າງເຂື່ອນໄຟຟ້າ, ສ້າງປ້ຳນ້ຳມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນ້ຳມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ ແລະ ການທະນາຄານ, ນຳໃຊ້ເປັນທຶນໝູນວຽນ ໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ຮອດທ້າຍປີ 2025, ບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ມີທັງໝົດ 12 ແຫ່ງ (ບໍ່ລວມບໍລິສັດຖອນຈົດທະບຽນ 1 ແຫ່ງຄື: ບໍລິສັດ ລາວເວິນ ມະຫາຊົນ).

**ຕາຕະລາງທີ 3: ສັງລວມສະພາບການອອກຈຳໜ່າຍພັນທະບັດລັດຖະບານ (ຮອດທ້າຍປີ 2025)**

| ລ/ດ | ລາຍການປີທີ່ອອກ | ຈຳນວນອອກ | ສະກຸນເງິນ | ຈຳນວນທີ່ຂາຍໄດ້ | ຄິດເປັນ % |
|---|---|---|---|---|---|
| 1 | 2018 | 1,000,000,000,000 | ກີບ | 1,000,000,000,000 | 100.00 |
| 2 | 2019 | 1,700,000,000,000 | ກີບ | 1,700,000,000,000 | 100.00 |
| 3 | 2020-2022 | 1,500,000,000,000 | ກີບ | 987,541,800,000 | 65.84 |
| 4 | 2020-2022 | 1,700,000,000,000 | ກີບ | 1,699,458,200,000 | 99.97 |
| 5 | 2023 | 1,000,000,000,000 | ກີບ | 1,000,000,000,000 | 100.00 |
| 6 | 2023 | 1,500,000,000,000 | ກີບ | 1,500,000,000,000 | 100.00 |
| 7 | 2023 | 1,500,000,000,000 | ກີບ | 1,500,000,000,000 | 100.00 |
| 8 | 2023 | 1,500,000,000,000 | ກີບ | 388,862,500,000 | 25.92 |
| 9 | 2024 | 1,200,000,000,000 | ກີບ | 987,541,800,000 | 82.30 |
| 10 | 2025 | 4,200,000,000,000 | ກີບ | 1,074,293,300,000 | 25.58 |
| 11 | 2020 | 50,000,000 | ໂດລາ | 50,000,000 | 100.00 |
| 12 | 2021 | 50,000,000 | ໂດລາ | 23,294,500 | 46.59 |

| | | | | | |
|---|---|---|---|---|---|
| 13 | 2023 | 50,000,000 | ໂດລາ | 50,000,000 | 100.00 |
| 14 | 2023 | 100,000,000 | ໂດລາ | 100,000,000 | 100.00 |
| 15 | 2024 | 100,000,000 | ໂດລາ | 45,278,200 | 45.28 |
| 16 | 2025 | 100,000,000 | ໂດລາ | 56,217,000 | 56.22 |
| 17 | 2023 | 3,000,000,000 | ບາດ | 3,000,000,000 | 100.00 |
| 18 | 2024 | 3,500,000,000 | ບາດ | 2,151,938,000 | 61.48 |
| 19 | 2024 | 4,000,000,000 | ບາດ | 4,000,000,000 | 100.00 |
| 20 | 2025 | 21,000,000,000 | ບາດ | 10,295,748,000 | 49.03 |
| 21 | 2025 | 1,550,000,000 | ຢວນ | 491,779,900 | 31.73 |
| **ລວມທັງໝົດ** | | **16,800,000,000,000** | **ກີບ** | **10,763,404,300,000** | **64.07** |
| **ລວມທັງໝົດ** | | **450,000,000** | **ໂດລາ** | **268,572,700** | **59.68** |
| **ລວມທັງໝົດ** | | **31,500,000,000** | **ບາດ** | **9,151,938,000** | **29.05** |
| **ລວມທັງໝົດ** | | **1,550,000,000** | **ຢວນ** | **491,779,900** | **31.73** |

ການຈຳໜ່າຍພັນທະບັດລັດຖະບານ ຜ່ານຕະຫຼາດທຶນລາວ ຮອດປີ 2025 ສາມາດຈຳໜ່າຍໄດ້ 16,800 ຕື້ກີບ ຄິດເປັນ 64.07%, ສະກຸນເງິນໂດລາ 450 ລ້ານໂດລາສະຫະລັດ ຄິດເປັນ 59.68%, ສະກຸນເງິນບາດ 31.5 ຕື້ບາດ ຄິດເປັນ 29.05% ແລະ ສະກຸນເງິນຢວນ 1.55 ຕື້ຢວນ ຄິດເປັນ 31.73%.

❖ **ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ**

ສຄຄຊ ເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍ ແລະ ບໍລິສັດຈົດທະບຽນ ດ້ວຍການຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ, ການຈ່າຍເງິນປັນຜົນ ແລະ ການນຳໃຊ້ທຶນ ພ້ອມທັງ ລົງຕິດຕາມ ແລະ ປະເມີນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຂອງບໍລິສັດຈົດທະບຽນ 10 ແຫ່ງ ລວມຈຳນວນ 11 ຄັ້ງ (ກອງປະຊຸມສາມັນ 10 ຄັ້ງ ແລະ ວິສາມັນ 01 ຄັ້ງ) ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ສຄຄຊ ໄດ້ຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນ ເຂົ້າຮ່ວມຝຶກອົບຮົມທີ່ກ່ຽວຂ້ອງກັບການໃຫ້ຄວາມຮູ້ທາງດ້ານມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ຄົ້ນຄວ້າຂຶ້ນແຜນຂອງຕົນເອງເພື່ອກ້າວໄປສູ່ການຈັດຕັ້ງປະຕິບັດມາດຕະຖານ IFRS ໃນປີ 2026. ພ້ອມນັ້ນ, ສຄຄຊ ໄດ້ທົບທວນ ແລະ ປັບປຸງຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ເພື່ອໃຫ້ສອດຄ່ອງກັບມາດຕະຖານສາກົນ ແລະ ຕິດຕາມຜົນການປະເມີນການຈັດຕັ້ງປະຕິບັດຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນ 10 ແຫ່ງ.

## 2.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

❖ **ການຄຸ້ມຄອງຕະຫຼາດຫຼັກຊັບ**

ໃນປີ 2025 ຕລຊລ ເປັນປີທີ່ການຊື້ຂາຍຫຼັກຊັບມີຄວາມຄຶກຄື້ນ ແລະ ເປັນປີທີ່ນັກລົງທຶນເຄື່ອນໄຫວຊື້ຂາຍຈຳນວນຫຼາຍ. ດັ່ງນັ້ນ, ສຄຄຊ ຈຶ່ງໄດ້ປະສານສົມທົບກັບ ຕລຊລ ໃນການຕິດຕາມກວດກາການເຄື່ອນໄຫວຊື້ຂາຍຫຼັກຊັບຢ່າງໃກ້ຊິດ ເພື່ອຮັບປະກັນ ຄວາມຍຸຕິທຳ ແລະ ຄວາມໂປ່ງໃສ ຄຽງຄູ່ກັບການຮັກສາຜົນປະໂຫຍດໃຫ້ແກ່ຜູ້ລົງທຶນ ໂດຍຕະຫຼອດໄລຍະປີ 2025 ສຄຄຊ ໄດ້ຕິດຕາມ ແລະ ລົງກວດກາບັນດາຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ

ຫຼັກຊັບຢ່າງໃກ້ຊິດ ເພື່ອເປັນການປົກປ້ອງຜູ້ລົງທຶນ ຄຽງຄູ່ກັບການທົບທວນບັນດາລະບຽບການ ເພື່ອໃຫ້ແທດເໝາະກັບສະພາບການໃນແຕ່ລະໄລຍະ.

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບ ຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານ ປະຈຳເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ ປະຈຳປີ 2025 ຈຳນວນ 01 ຄັ້ງ ໂດຍລົງເລິກ ກວດກາລະບົບການຊື້ຂາຍ, ການເກັບຮັກສາຂໍ້ມູນ, ເອກະສານລາຍງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ຕະຫຼາດຫຼັກຊັບ.

### ❖ ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ມູນຄ່າຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນວັນທີ 26 ທັນວາ 2025 ມີມູນຄ່າ 24,502.14 ຕື້ກີບ. ດັດຊະນີຕະຫຼາດຫຼັກຊັບລາວ ໃນທ້າຍປີ 2025 ປິດຢູ່ທີ່ 1,247.13 ຈຸດ ເພີ່ມຂຶ້ນ 8.44% ທຽບໃສ່ດັດຊະນີ ຂອງທ້າຍປີ 2024 ໂດຍມີມູນຄ່າການຊື້ຂາຍທັງໝົດ 256.22 ຕື້ກີບ ເພີ່ມຂຶ້ນ 724.51% ເມື່ອທຽບໃສ່ປີ 2024. ໃນນັ້ນ, ການຊື້ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 15.25% ແລະ ສັງເກດເຫັນວ່າ ໃນປີນີ້ ຕະຫຼາດຫຼັກຊັບລາວ ມີບໍລິສັດຈົດທະບຽນໃໝ່ 2 ບໍລິສັດຄື: ບໍລິສັດ LCS ແລະ JDB ເຊິ່ງເປັນສອງບໍລິສັດທີ່ໄດ້ຮັບຄວາມສົນໃຈຈາກຜູ້ລົງທຶນ. ນອກຈາກນັ້ນ, ໃນປີ 2025 ຜູ້ລົງທຶນພາຍໃນໄດ້ໃຫ້ຄວາມສົນໃຈໃນການຊື້ຮຸ້ນ BCEL ເປັນຈຳນວນຫຼາຍໃນຕະຫຼາດຂັ້ນສອງ ໂດຍການເຄື່ອນໄຫວດັ່ງກ່າວໄດ້ກາຍເປັນປັດໃຈສຳຄັນຂອງມູນຄ່າການຊື້ຂາຍໂດຍລວມໃນປີນີ້.

**ແຜນວາດ 1: ມູນຄ່າການຊື້ຂາຍຮຸ້ນ ທຽບກັບ ດັດສະນີຂອງ ຕະຫຼາດຫຼັກຊັບ (11 ມັງກອນ 2011 – 26 ທັນວາ 2025)**



**ແຜນວາດ 2: ການເໜັງຕີງລາຄາຮຸ້ນ EDL GEN, BCEL, LWPC, PTL, SVN, PCD, LCC, MHTL LAT, VCL ແລະ LALCO (04 ມັງກອນ ຫາ 26 ທັນວາ 2025)**




## 2.4 ການຄຸ້ມຄອງສະຖາບັນສີ່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ໃນການຄຸ້ມຄອງສະຖາບັນສີ່ກາງດ້ານຫຼັກຊັບ ໂດຍສະເພາະບໍລິສັດຫຼັກຊັບ 04 ບໍລິສັດ, ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິ ໂດຍພື້ນຖານນຳໃຊ້ຫຼັກການຄຸ້ມຄອງບໍລິສັດຫຼັກຊັບຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision), ຕິດຕາມດ້ວຍຮູບແບບການກວດກາທາງເອກະສານປະຈຳເດືອນ, ໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ. ອັນພົ້ນເດັ່ນແມ່ນສຳເລັດ ຄົ້ນຄວ້າແຈ້ງຕອບບໍລິສັດຫຼັກຊັບຕິດພັນກັບການແກ້ໄຂບັນຫາຕ່າງໆ ເປັນຕົ້ນ: ການຄົ້ນຄວ້າ ການຈັດຕັ້ງປະຕິບັດພາສີອາກອນຂອງ 02 ບໍລິສັດຫຼັກຊັບ ທີ່ຍົກຍ້າຍສະຖານທີ່ຕັ້ງສຳນັກງານໄປຢູ່ເຂດເສດຖະກິດບຶງທາດຫຼວງ, ການຍົກເວັ້ນອາກອນມູນຄ່າເພີ່ມຂອງລາຍຮັບທີ່ປຶກສາທາງດ້ານການເງິນຂອງບໍລິສັດຫຼັກຊັບ 01 ແຫ່ງ, ການຕໍ່ວາລະການດຳລົງຕຳແໜ່ງຂອງຜູ້ອຳນວຍການ ແລະ ການເຫັນດີຕໍ່ການແຕ່ງຕັ້ງຮອງຜູ້ອຳນວຍການຂອງບໍລິສັດຫຼັກຊັບ 01 ກໍລະນີ; ປັບປຸງໃບອະນຸຍາດດຳເນີນທຸລະກິດ (ສະບັບປັບປຸງ) ຂອງບໍລິສັດຫຼັກຊັບ ຈຳນວນ 02 ຄັ້ງ. ພ້ອມນັ້ນ, ສຳເລັດການຊຸກຍູ້ບໍລິສັດຫຼັກຊັບ 01 ແຫ່ງ ພັດທະນາລະບົບຊື້-ຂາຍຫຼັກຊັບຜ່ານມືຖື (MTS) ແລະ ອະນຸຍາດໃຫ້ເປີດນຳໃຊ້ແອັບດັ່ງກ່າວຢ່າງເປັນທາງການໃນເດືອນ ຕຸລາ 2025. ສຳເລັດການຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະເພດຜູ້ບໍລິຫານກອງທຶນເພື່ອການລົງທຶນ ຈຳນວນ 01 ຄັ້ງ; ສຳເລັດການເຮັດວຽກຮ່ວມກັບ ສຕຟງ ເພື່ອທົບທວນ ແລະ ປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ຕິດພັນວຽກງານຫຼັກຊັບ (Module12).

ພ້ອມນັ້ນ, ໄດ້ເອົາໃຈໃສ່ຄຸ້ມຄອງ, ກວດກາ ແລະ ຕິດຕາມ ບັນດາສະຖາບັນສີ່ກາງດ້ານຫຼັກຊັບທີ່ຖືກຮັບຮອງຈາກ ສຄຄຊ ໃຫ້ເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຜ່ານທາງເອກະສານ ຢ່າງເປັນປົກກະຕິ ພົ້ນເດັ່ນແມ່ນສຳເລັດການຄົ້ນຄວ້າຍົກເລີກແຈ້ງການໂຈະຊົ່ວຄາວການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງທະນາຄານ ສະບັບເລກທີ 70/ສຄຄຊ, ລົງວັນທີ 04 ກັນຍາ 2020. ສຳເລັດການອອກແຈ້ງການ ອະນຸຍາດໃຫ້ສືບຕໍ່ເປີດການຂໍຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງທະນາຄານ ສະບັບເລກທີ 23/ສຄຄຊ, ລົງວັນທີ 16 ມິຖຸນາ

2025; ສຳເລັດການຄົ້ນຄວ້າຮັບຮອງບໍລິສັດປະເມີນມູນຄ່າຊັບສິນເຂົ້າມາເຄື່ອນໄຫວໃນວຽກງານຫຼັກຊັບ 4 ແຫ່ງ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ 2 ແຫ່ງ, ບໍລິສັດຈັດອັນດັບຄວາມໜ້າເຊື່ອຖືຈາກ ປະເທດກຳປູເຈຍ 1 ແຫ່ງ, ທະນາຄານດູຊັບສິນ 1 ແຫ່ງ, ທະນາຄານຕົວແທນເພື່ອການຊຳລະໃນຂົງເຂດວຽກງານຫຼັກຊັບ 2 ແຫ່ງ; ຄົ້ນຄວ້າຕໍ່ອາຍຸໃບຮັບຮອງບໍລິສັດກວດສອບ 1 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 5 ແຫ່ງ, ທະນາຄານດູແລຊັບສິນ 1 ແຫ່ງ, ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບ ປາຊີຟິກຫຸ້ນສ່ວນ ຈຳກັດ ປະຈຳ ສປປ ລາວ 1 ແຫ່ງ. ພ້ອມນີ້, ຍັງໄດ້ສຳເລັດການຄົ້ນຄວ້າເບື້ອງຕົ້ນກ່ຽວກັບນະໂຍບາຍອາກອນທີ່ຕິດພັນກັບກອງທຶນ ເພື່ອການລົງທຶນໃນບໍລິສັດ (PE Fund) ແລະ ທຸລະກິດຮ່ວມລົງທຶນ (Venture Capital Fund) ແລະ ຜູ້ລົງທຶນ; ສຳເລັດ ການຄົ້ນຄວ້າຂໍຮັບຮອງລະບົບການໃຫ້ບໍລິການເປີດບັນຊີຫຼັກຊັບ (Online Account) ຜ່ານທາງແອັບພິເຄຊັນ BCEL One ຂອງບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ເຊິ່ງເປັນລະບົບທີ່ຊ່ວຍໃຫ້ຜູ້ລົງທຶນສາມາດປະກອບຂໍ້ມູນການເປີດບັນຊີຜ່ານທາງອອນລາຍ.

ນອກຈາກນີ້, ສຄຄຊ ໄດ້ຖືສຳຄັນໃນການຄຸ້ມຄອງ ແລະ ກໍ່ສ້າງນັກວິຊາຊີບໃນຂົງເຂດວຽກງານຫຼັກຊັບ ແນໃສ່ຮັບປະກັນໃຫ້ການບໍລິການແກ່ລູກຄ້າມີປະສິດທິພາບ, ສອດຄ່ອງຕາມລະບຽບກົດໝາຍ ແລະ ຖືກຕ້ອງຕາມມາດຕະຖານຂອງວິຊາຊີບທີ່ກ່ຽວຂ້ອງ, ອັນພົ້ນເດັ່ນ ໄດ້ສຳເລັດ ການຄົ້ນຄວ້າຮັບຮອງນັກວິຊາຊີບທຸລະກິດຫຼັກຊັບໃໝ່ ຈຳນວນ 03 ທ່ານ, ຕໍ່ອາຍຸ 08 ທ່ານ, ຮັບຮອງຜູ້ປະເມີນມູນຄ່າຊັບສິນໃໝ່ ຈຳນວນ 19 ທ່ານ, ຕໍ່ອາຍຸ 08 ທ່ານ ແລະ ຮັບຮອງນັກກວດສອບໃໝ່ ຈຳນວນ 02 ທ່ານ, ຕໍ່ອາຍຸ 03 ທ່ານ.

ຮອດປັດຈຸບັນ, ມີຈຳນວນສະຖາບັນສີກາງດ້ານຫຼັກຊັບ ແລະ ຊົມລົມທີ່ກ່ຽວຂ້ອງທີ່ໄດ້ຮັບຮອງຈາກ ສຄຄຊ ໃຫ້ເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ລວມທັງໝົດມີ 42 ແຫ່ງ (ບໍລິສັດຫຼັກຊັບ 04 ແຫ່ງ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ 2 ແຫ່ງ, ບໍລິສັດກວດສອບ 04 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 12 ແຫ່ງ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື 02 ແຫ່ງ, ທະນາຄານດູແລຊັບສິນ 05 ແຫ່ງ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ 04 ແຫ່ງ, ທະນາຄານຕົວແທນເພື່ອການຊຳລະ-ສະສາງໃນວຽກງານຫຼັກຊັບ 06 ແຫ່ງ, ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ 01 ແຫ່ງ, ຊົມລົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ 01 ແຫ່ງ ແລະ ຊົມລົມບໍລິສັດປະເມີນມູນຄ່າຊັບສິນ 01 ແຫ່ງ). ຄຽງຄູ່ກັນນັ້ນ ນັກວິຊາຊີບທີ່ຖືກຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ທັງໝົດ 78 ທ່ານ ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 23 ທ່ານ, ນັກວິຊາຊີບກວດສອບ 23 ທ່ານ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 32 ທ່ານ.

## 2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ເພື່ອຮັບປະກັນສິດທິ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ສຄຄຊ ໄດ້ເອົາໃຈໃສ່ຕິດຕາມການເປີດເຜີຍຂໍ້ມູນຂອງບັນດາບໍລິສັດ ໂດຍໄດ້ປະຕິບັດການຄົ້ນຄວ້າ, ສຶກສາອົບຮົມ ແລະ ແກ້ໄຂບັນຫາການລາຍງານ ແລະ ເປີດເຜີຍຂໍ້ມູນບໍ່ທັນເວລາຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ. ຄຽງຄູ່ກັນນີ້, ສຄຄຊ ຍັງໄດ້ສຳເລັດການຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດນອກວັດຖຸປະສົງຈຳນວນໜຶ່ງ. ພ້ອມທັງ, ປະສານຫາພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ ແລະ ພິຈາລະນາດຳເນີນການແກ້ໄຂ ແລະ ສະໜອງຂໍ້ມູນທີ່ຈຳເປັນຕິດພັນກັບວຽກງານຫຼັກຊັບໃຫ້ແກ່ການດຳເນີນຄະດີຂອງເຈົ້າໜ້າທີ່ຕຳຫຼວດ 2 ກໍລະນີ. ພ້ອມນີ້, ກໍ່ໄດ້ສືບຕໍ່ເປີດນຳໃຊ້ຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ໃນກໍລະນີສົງໃສວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານຊ່ອງທາງ ດັ່ງລຸ່ມນີ້:

1) ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຕຶກຫ້ອງການ ສຄຄຊ;
2) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
3) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).

## 2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ

ໃນປີ 2025 ສຄຄຊ ໄດ້ເອົາໃຈໃສ່ຕິດຕາມ ແລະ ຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເຊິ່ງຜ່ານການຕິດຕາມ, ກວດກາ ເຫັນວ່າ: ມີບໍລິສັດຈົດທະບຽນ ຈຳນວນໜຶ່ງ ໄດ້ເຄື່ອນໄຫວບໍ່ສອດຄ່ອງກັບ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການກ່ຽວຂ້ອງກັບວຽກງານຫຼັກຊັບ, ສຄຄຊ ໄດ້ຄົ້ນຄວ້າ ແລະ ປະຕິບັດມາດຕະການປັບໄໝຕໍ່ ບໍລິສັດຈົດທະບຽນ ຈຳນວນ 2 ກໍລະນີ. ພ້ອມນີ້, ສຄຄຊ ໄດ້ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອຄົ້ນຄວ້າປະຕິບັດມາດຕະການຕໍ່ກັບ ບໍລິສັດທີ່ເຄື່ອນໄຫວນອກອັດຖຸປະສົງ 2 ແຫ່ງ ທີ່ໄດ້ມີການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ.

## 2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ສຄຄຊ ໄດ້ສຸມໃສ່ພັດທະນາວຽກງານຝຶກອົບຮົມກ່ຽວກັບວຽກງານຕະຫຼາດທຶນ ໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ ເຊິ່ງໃນປີ 2025 ໄດ້ສຳເລັດ ການຈັດຝຶກອົບຮົມກ່ຽວກັບວຽກງານຫຼັກຊັບ ຈຳນວນ 10 ຫົວຂໍ້/11 ຄັ້ງ (ໃນແຜນ 7 ຫົວຂໍ້ ນອກແຜນ 3 ຫົວຂໍ້). ໃນນີ້ ຈັດຢູ່ພາຍໃນນະຄອນຫຼວງວຽງຈັນ 08 ຄັ້ງ ຫົວຂໍ້ກ່ຽວກັບ: 1) ບັນດາຫຼັກການປະເມີນມູນຄ່າຮຸ້ນ (Stock Valuation), 2) ແບບຈຳລອງທາງການເງິນ (Financial Modeling), 3) ການລົງທຶນໃນຫຼັກຊັບປະເພດໜີ້ (Fixed income Investment Analysis), 4) ທົບທວນບັນດາລະບຽບການທີ່ຕິດພັນກັບບັນດານັກວິຊາຊີບທຸລະກິດຫຼັກຊັບ (Refestment), ແລະ 5) ຫຼັກສູດສຳລັບຜູ້ບໍລິຫານເພື່ອການດຳເນີນງານທີ່ດີ ຄັ້ງທີ IV (Board Leadership Program: BLP), 6) ການກວດສອບພາຍໃນ (Internal Audit), 7) ການປະເມີນມູນຄ່າຊັບສິນ, 8). ການວິເຄາະຊ່ອງຫວ່າງ ມາດຕະຖານສາກົນ ກັບ ມາດຕະຖານດ້ານການລາຍງານການເງິນ (GAP analysis between IFRS and LAS) ແລະ ຈັດຝຶກອົບຮົມຢູ່ຕ່າງແຂວງ 03 ຄັ້ງ (ແຂວງອຸດົມໄຊ, ຫຼວງພະບາງ ແລະ ແຂວງ ຊຽງຂວາງ) ກ່ຽວກັບ 1) ການລົງທຶນແບບ DCA (Dollar-Cost averaging) 2) ການລົງທຶນແບບ VA (Value Averaging) ແລະ 3) ຄວາມຮູ້ພື້ນຖານການລົງທຶນໃນຮຸ້ນ.

**ຮູບພາບ 5: ບັນຍາກາດການຈັດຝຶກອົບຮົມ**




### ❖ ການເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ

ການຈັດຕັ້ງປະຕິບັດວຽກງານເຜີຍແຜ່ໃນປີ 2025 ສຳເລັດທັງໝົດ 07 ຄັ້ງ ລວມມີ 15 ຫົວຂໍ້ (ຕາມແຜນ 04 ຄັ້ງ ນອກແຜນ 03 ຄັ້ງ) ມີຜູ້ເຂົ້າຮ່ວມທັງໝົດ 555 ຄົນ ດັ່ງລາຍລະອຽດນີ້:

1. ເຜີຍແຜ່ວຽກງານຫຼັກຊັບພາຍໃນນະຄອນຫຼວງວຽງຈັນ ຈຳນວນ 05 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 381 ຄົນ ໄດ້ແກ່: ❶ບັນດາບໍລິສັດຈົດທະບຽນ ແລະ ❷ບັນດາບໍລິສັດເປົ້າໝາຍຈົດທະບຽນ ປະກອບມີ 4 ຫົວຂໍ້ ຄື: 1) ການຈັດກອງປະຊຸມຜູ້ຖືຮຸ້ນ; 2) ການລາຍງານ ແລະ ການເປີດເຜີຍຂໍ້ມູນ; 3) ຄວາມສຳຄັນ

ຂອງການອອກຈຳໜ່າຍຫຼັກຊັບ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ (ຈຸດດີ,ສິ່ງທ້າທາຍ, ຜົນປະໂຫຍດ ແລະ ພັນທະທີ່ຕ້ອງໄດ້ຈັດຕັ້ງປະຕິບັດ); 4) ການກະກຽມຄວາມພ້ອມຮອບດ້ານໃນການອອກຈຳໜ່າຍຫຼັກຊັບ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ;❸ອົງການໄອຍະການສານປະຊາຊົນສູງສຸດ, ແລະ ❹ກະຊວງປ້ອງກັນຄວາມສະຫງົບ (ນອກແຜນ) ປະກອບມີ 5 ຫົວຂໍ້ ຄື 1) ອົງການຄຸ້ມຄອງວຽກງານຫຼັກຊັບ ແລະ ພາບລວມຕະຫຼາດທຶນລາວ; 2) ຄວາມຮູ້ພື້ນຖານກ່ຽວກັບການລົງທຶນໃນຮຸ້ນ (ຈຳລອງການຊື້-ຂາຍ); 3) ການວິເຄາະຄວາມສ່ຽງກ່ອນການລົງທຶນ 4) ວຽກງານສືບສວນສອບສວນ; 5) ວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❺ເຜີຍແຜ່ໃຫ້ແກ່ພະນັກງານຄູອາຈານ ແລະ ນັກສຶກສາສະຖາບັນການທະນາຄານພາຍໃຕ້ການຮ່ວມມື 2 ຝ່າຍ MOU ລະຫວ່າງ ສຄຄຊ ແລະ ສທຄ (ນອກແຜນ), ປະກອບມີ 3 ຫົວຂໍ້: 1) ພາລະບົດບາດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ; 2) ພາບລວມຂອງຕະຫຼາດທຶນລາວ; 3) ຄວາມຮູ້ພື້ນຖານກ່ຽວກັບການຊື້-ຂາຍຫຼັກຊັບ.

2. ເຜີຍແຜ່ວຽກງານຫຼັກຊັບຢູ່ຕ່າງແຂວງ ຈຳນວນ 02 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 174 ຄົນ ໄດ້ແກ່: ❶ແຂວງ ຄຳມ່ວນ ແລະ ❷ແຂວງ ວຽງຈັນ ປະກອບມີ 3 ຫົວຂໍ້ ຄື 1) ການຄຸ້ມຄອງວຽກງານຫຼັກຊັບ, 2) ພາບລວມຕະຫຼາດທຶນໃນ ສປປ ລາວ, 3) ຄວາມຮູ້ພື້ນຖານກ່ຽວກັບ ການຊື້-ຂາຍຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ, ໂດຍເປົ້າໝາຍຜູ້ເຂົ້າຮ່ວມປະກອບມີຈາກທັງພາກລັດ-ເອກະຊົນ.

❖ **ການໂຄສະນາກ່ຽວກັບວຽກງານຫຼັກຊັບ**

ໃນປີ 2025 ສຄຄຊ ໄດ້ຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບໃນຫຼາກຫຼາຍຮູບແບບ ເປັນຕົ້ນແມ່ນ ❶ ຂ່າວການເຄື່ອນໄຫວວຽກງານຫຼັກຊັບ, ❷ ວິດີໂອ ສາລະຕະຫຼາດທຶນ, ❸ວິດີໂອສຳພາດລາຍການ Podcast, ❹ ວິດີໂອກາຕູນສັ້ນ Animation ແລະ ❺ ໂປສເຕີ ສະແດງພາບ Infographic ໂດຍຜ່ານສື່ອອນລາຍທາງການ ຂອງ ສຄຄຊ ຜ່ານ 02 ຊ່ອງທາງຫຼັກ ໄດ້ແກ່ 1) ເພຈ ເຟສບຸກ (Facebook page: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ) ແລະ 2) ຢູທູບ (YouTube Channel: LSCO ສຳນັກງານ ຄຄຊ) ດັ່ງລາຍລະອຽດລຸ່ມນີ້:

**1) ໂຄສະນາຜ່ານສື່ສັງຄົມອອນລາຍ**

- ໂຄສະນາເຜີຍແຜ່ ຜ່ານ Facebook page ປະກອບມີ: ຂ່າວການເຄື່ອນໄຫວ ແລະ ເຫດການສຳຄັນຕ່າງໆກ່ຽວກັບວຽກງານຫຼັກ ຈຳນວນ ທັງໝົດ 64 ຄັ້ງ ປະກອບມີ: ຂ່າວການເຄື່ອນໄຫວວຽກງານຫຼັກຊັບ 57 ຫົວຂໍ້, ຂ່າວໂຄສະນາ ແລະ ປະຊາສຳພັນ 7 ຫົວຂໍ້, ວິດີໂອPodcast ຈຳນວນ 8 ຫົວຂໍ້, ວິດີໂອກະຕູນສັ້ນ (Animation) ຈຳນວນ 4 ຫົວຂໍ້, ວິດີໂອສາລະຕະຫຼາດທຶນ ຈຳນວນ 12 ຫົວຂໍ້, ໂປສເຕີສະແດງຂໍ້ມູນ Infographic ຈຳນວນ 12 ຫົວຂໍ້;
- ໂຄສະນາເຜີຍແຜ່ YouTube Channel ປະກອບມີ: ວິດີໂອສາລະຕະຫຼາດທຶນ ຈຳນວນ 12 ຫົວຂໍ້, ວິດີໂອ Podcast ຈຳນວນ 8 ຫົວຂໍ້, ວິດີໂອກະຕູນສັ້ນ (Animation) ຈຳນວນ 4 ຫົວຂໍ້, ໂປສເຕີສະແດງພາບ Infographic ທັງໝົດ 12 ຫົວຂໍ້.

2) **ໂຄສະນາຜ່ານສື່ວິທະຍຸກະຈາຍສຽງແຫ່ງຊາດລາວ 103.7 MHz**

- ໂຄສະນາເຜີຍແຜ່ກ່ຽວກັບ ນິຕິກຳວຽກງານຫຼັກຊັບ ລາຍການວິທະຍຸຂອງ ທຫລ **"ລາຍການ ເພື່ອນທະນາຄານ"** ຈຳນວນ ທັງໝົດ 157 ເທື່ອ;
- ໂຄສະນາທາງວິທະຍຸ **"ຊັບຊີ່ປອດໄພ"** ແລະ ສຳເລັດການສ້າງສະປອດໂຄສະນາຈຳນວນ 05 ຫົວຂໍ້ ຄື: 1) ສົນໃຈລົງທຶນໃນຫຼັກຊັບ ຈະເຮັດແນວໃດ, 2) ຜົນປະໂຫຍດທີ່ຈະໄດ້ຮັບຈາກການລົງທຶນໃນຮຸ້ນ, 3) ຢາກລົງທຶນໃນຮຸ້ນ ປຶກສາໃຜໄດ້ແດ່? 4) ບໍລິສັດຫຼັກຊັບ ແລະ 5) ກົດໝາຍວ່າດ້ວຍຫຼັກຊັບ.

3) **ໂຄສະນາຜ່ານຮູບແບບອື່ນໆ**

- ການຕັ້ງບູດວາງສະແດງກ່ຽວກັບວຽກງານຫຼັກຊັບໃນງານ Money Expo 2025 ໃນລະຫວ່າງ ວັນທີ 15-21 ທັນວາ 2025.

**ຮູບພາບ 6: ບັນຍາກາດການລົງເຜີຍແຜ່ ວຽກງານຫຼັກຊັບພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ**




**ຮູບພາບ 7: ການໂຄສະນາເຜີຍແຜ່ຜ່ານສື່ສັງຄົມອອນລາຍ, ວິທະຍຸ ແລະ ຊ່ອງທາງອື່ນໆ**



❖ <u>ການກະກຽມສ້າງສູນໃຫ້ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ</u>

ສຄຄຊ ໄດ້ເອົາໃຈໃສ່ວຽກງານການຄົ້ນຄ້ວາສ້າງສູນໃຫ້ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໂດຍໄດ້ສຳເລັດການແຕ່ງຕັ້ງຄະນະຊີ້ນຳລວມ ແລະ ແຕ່ງຕັ້ງຄະນະອະນຸກຳມະການຊ່ວຍວຽກ ເຊິ່ງປະກອບດ້ວຍ ສຄຄຊ, ກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ, ສະຖາບັນການທະນາຄານ ແລະ ຕະຫຼາດຫຼັກຊັບລາວ. ຄະນະດັ່ງກ່າວໄດ້ສຳເລັດ ການເຂົ້າຮ່ວມຖອດຖອນບົດຮຽນກ່ຽວກັບວຽກງານສ້າງສູນໃຫ້ຄວາມຮູ້ວຽກງານຕະຫຼາດທຶນ ທີ່ ສສ. ຫວຽດນາມ (ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງລັດ ສສ. ຫວຽດນາມ) ແລະ ປະເທດໄທ (ສະມາຄົມສົ່ງເສີມສະຖາບັນກຳມະການບໍລິສັດໄທ) ເພື່ອເປັນບ່ອນອີງໃນການຄົ້ນຄວ້າວຽກງານດັ່ງກ່າວ.

**ຮູບພາບ 8: ບັນຍາກາດການໄປຖອດຖອນບົດຮຽນການສ້າງສູນໃຫ້ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ**




## 2.8 ການຮ່ວມມືສາກົນ

ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົວພັນຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນສະໜັບສະໜູນ ເພື່ອຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ, ແລກປ່ຽນຂໍ້ມູນຂ່າວສານ ແລະ ພັດທະນາວຽກງານຕະຫຼາດທຶນ.

ໃນຮູບແບບສອງຝ່າຍ ສຄຄຊ ໄດ້ຈັດກອງປະຊຸມສອງຝ່າຍປະຈຳປີຮ່ວມກັບ ຄຄຊ ຕ່າງປະເທດ ຈຳນວນ 02 ຄັ້ງ; ເຂົ້າຮ່ວມກອງປະຊຸມພົບປະ ຄຄຊ ສປ. ຈີນ, ຄຄຊ ຮົງກົງ, ຕະຫຼາດຫຼັກຊັບຮົງກົງ ແລະ ຕະຫຼາດຫຼັກຊັບເສີນເຈີ້ນ; ຮ່ວມມືກັບອົງການຈັດຕັ້ງສາກົນເຊັ່ນ: ADB, IFC ແລະ GGGI ໃນການພັດທະນາວຽກງານຕະຫຼາດທຶນລາວ; ໄດ້ສະເໜີ ສະຖານທູດລຸກຊໍາບວກ ປະຈຳ ສປປ ລາວ ເພື່ອພິຈາລະນາແຜນສືບຕໍ່ໂຄງການຮ່ວມມື 3 ຝ່າຍ (ສປປ ລາວ, ສສ. ຫວຽດນາມ ແລະ ລຸກຊໍາບວກ) ໃນຂະແໜງການເງິນ (Lao/032); ໄດ້ສະເໜີ IOSCO ເພື່ອປະເມີນຄວາມສອດຄ່ອງດ້ານນິຕິກຳທີ່ກ່ຽວຂ້ອງເບື້ອງຕົ້ນ ເພື່ອສະເໜີເຂົ້າເປັນ ສະມາຊິກສົມບູນຂອງ IOSCO. ພ້ອມດຽວກັນນີ້, ສຄຄຊ ຍັງໄດ້ເຂົ້າຮ່ວມ ກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ 60 ຄັ້ງ, ມີຜູ້ເຂົ້າຮ່ວມຫຼາຍກວ່າ 182 ເທື່ອຄົນ ເປັນຕົ້ນແມ່ນ ກອງປະຊຸມຂອງ ACMF, WC-CMD, ABMF, ກອງປະຊຸມປະຈຳປີຂອງ IOSCO, ກອງປະຊຸມ Boao Forum for Asia (BFA) ປະຈຳປີ 2025 ເປັນຕົ້ນ; ສ່ວນໃນຂອບການຮ່ວມມືສອງຝ່າຍມີ 14 ຫົວຂໍ້, ມີຜູ້ເຂົ້າຮ່ວມ 42 ເທື່ອຄົນ ແລະ ຂອບການຮ່ວມມືຫຼາຍຝ່າຍ 46 ຫົວຂໍ້, ມີຜູ້ເຂົ້າຮ່ວມລວມ 140 ເທື່ອຄົນ.

ຮູບພາບ 10: ການເຂົ້າຮ່ວມ ກອງປະຊຸມສອງຝ່າຍ ຄັ້ງທີ 3 ປະຈຳປີ 2025 ຮ່ວມກັບ ປະເທດ ກຳປູເຈຍ



ຮູບພາບ 11: ການເຂົ້າຮ່ວມ ກອງປະຊຸມພົບປະສອງຝ່າຍ ຄັ້ງທີ 13 ຮ່ວມກັບ ສສ. ຫວຽດນາມ



ຮູບພາບ 9: ການເຂົ້າຮ່ວມກອງປະຊຸມຄະນະກຳມະການພາກພື້ນອາຊີ-ປາຊີຟິກ (IOSCO:APRC)



## III. ທິດທາງແຜນການ ປີ 2026

### 1. ຄາດຄະເນສະພາບຕະຫຼາດທຶນຂອງຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ຄາດວ່າຈະມີທັງກາລະໂອກາດ ແລະ ສິ່ງທ້າທາຍ ຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ ເປັນຕົ້ນ ສະພາບການເມືອງຂອງ ສ. ອາເມລິກາ, ພາວະເງິນເຟີ້ຂອງບັນດາປະເທດໃນທົ່ວໂລກ ແລະ ບັນຫາອື່ນໆ ຊຶ່ງຄາດວ່າຈະສົ່ງຜົນກະທົບ ຕໍ່ເສດຖະກິດ ແລະ ບັນຍາກາດການລົງທຶນໃນຫຼັກຊັບ ຢູ່ໃນທົ່ວໂລກ ໂດຍສະເພາະ ຄວາມກັງວົນຂອງຜູ້ລົງທຶນ ຕໍ່ນະໂຍບາຍແກ້ໄຂ ແລະ ມາດຕະການກະຕຸ້ນເສດຖະກິດຂອງແຕ່ລະປະເທດ. ປີ 2026 ຄາດວ່າຈະເປັນປີແຫ່ງຄວາມທ້າທາຍຂອງສາກົນ ສືບເນື່ອງຈາກສະຖານະການຄວາມບໍ່ສະຫງົບໃນຕາເວັນອອກກາງທີ່ເກີດຂຶ້ນໃນໄຕມາດທີ 1 ຂອງປີ ໄດ້ສ້າງຜົນກະທົບ ແລະ ຄວາມວິຕົກກັງວົນເປັນຢ່າງຍິ່ງຕໍ່ກັບສະຖຽນລະພາບການຟື້ນຕົວຂອງເສດຖະກິດໂລກ, ບັນຫາພະລັງງານ, ບັນຫາເງິນເຟີ້ ທີ່ຈະກະທົບໄປເຖິງຕະຫຼາດທຶນໃນລະດັບສາກົນ. ນອກນີ້, ຍັງມີຄວາມບໍ່ແນ່ນອນໃນເວທີສາກົນ ຕໍ່ສະຖານະການຂໍ້ຂັດແຍ່ງທີ່ອາດຈະເກີດຂຶ້ນລະຫວ່າງປະເທດ, ການຄ້າລະຫວ່າງປະເທດ ເຊິ່ງຈະກາຍເປັນອີກປັດໃຈກັງວົນໜຶ່ງທີ່ຈະກະທົບຕໍ່ກັບທິດທາງຕະຫຼາດທຶນສາກົນໃນປີ 2026. ພ້ອມນີ້, ການພັດທະນາ ປັນຍາປະດິດ (AI) ກໍ່ຈະຍັງເປັນປັດໃຈສຳຄັນ ແລະ ຕົວແປໃຫ້ແກ່ຕະຫຼາດທຶນ ທີ່ເປັນທັງ ປັດໃຈບວກ ແລະ ປັດໃຈກະທົບໃຫ້ແກ່ຕະຫຼາດທຶນສາກົນ ເຊິ່ງເປັນສິ່ງທ້າທາຍທີ່ຜູ້ລົງທຶນສາກົນໃຫ້ຄວາມສົນໃຈ ແລະ ຕິດຕາມໃນປີ 2026 ນີ້.

### 2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ

ປີ 2026 ອາດເປັນປີທີ່ບໍ່ແນ່ນອນສຳຫຼັບຕະຫຼາດທຶນລາວ ເຖິງແມ່ນວ່າປີ 2025 ຈະເປັນປີທີ່ມີຄວາມຄຶກຄັກ ແລະ ມີມູນຄ່າການຊື້ຂາຍທີ່ສູງກວ່າທີ່ຄາດການກໍ່ຕາມ ແຕ່ກໍ່ຍັງເຫັນວ່າ ຍັງມີບາງປັດໃຈທີ່ຍັງບໍ່ເກີດໃນການ ກະຕຸ້ນຕະຫຼາດເຊັ່ນ ການອອກຈຳໜ່າຍຮຸ້ນກູ້ສີຂຽວຄັ້ງປະຖົມມະລຶກ ທີ່ຍັງບໍ່ທັນເກີດ ແລະ ຄວາມຫຼາກຫຼາຍ ຂອງຜະລິດຕະພັນຍັງມີຈຳກັດ ໃນຂະນະທີ່ຮູບການຂອງການໃຫ້ບໍລິການ ເຖິງແມ່ນວ່າຈະມີ Mobile Trading System ເກີດຂຶ້ນໃນປີ 2025 ກໍ່ຕາມ ແຕ່ກໍ່ຍັງເປັນການໃຫ້ບໍລິການຂອງບໍລິສັດຫຼັກຊັບພຽງບໍລິສັດດຽວ ໃນຂະນະທີ່ຮຸ້ນ BCEL ກໍ່ບໍ່ໄດ້ຮັບປະກັນວ່າ ຈະມີຜູ້ລົງທຶນລາຍໃຫຍ່ໃໝ່ໆເຂົ້າມາເກັບຊື້ຮຸ້ນສະສົມຄືກັບປີ 2025 ເຊິ່ງກາຍເປັນ ຕົວແປສຳຄັນຂອງປີດັ່ງກ່າວ. ດັ່ງນັ້ນ, ທິດທາງຕະຫຼາດທຶນລາວໃນປີ 2026 ອາດບໍ່ຄຶກຄັກເທົ່າກັບປີ 2025 ຫາກບໍ່ມີເງື່ອນໄຂຂອງການລະດົມທຶນ-ເຂົ້າຈົດທະບຽນ ແລະ ຊື້ຂາຍຮຸ້ນກູ້ສີຂຽວໃນຕະຫຼາດທຶນລາວ, ການເຂົ້າລະດົມທຶນ ແລະ ຈົດທະບຽນຂອງບັນດາວິສາຫະກິດທີ່ມີທ່າແຮງ-ມີສັກກະຍະພາບຫຼາຍກວ່າ 1-2 ບໍລິສັດ ເພື່ອຊ່ວຍກະຕຸ້ນຕະຫຼາດ. ພ້ອມນີ້, ປັດໃຈກະທົບຈາກສະພາບການສາກົນໂດຍສະເພາະ ຂະແໜງພະລັງງານກາຍເປັນປັດໃຈທ້າທາຍ ຊຶ່ງອາດສົ່ງຜົນກະທົບ ຫຼື ແຮງເສີມໃຫ້ແກ່ທິດທາງຕະຫຼາດທຶນລາວໃນປີ 2026 ນີ້.

### 3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2026

#### 3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ

ອີງໃສ່ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ ໄດ້ຮຽກຮ້ອງໃຫ້ມີນິຕິກຳ ເພື່ອຄຸ້ມຄອງບັນດາພຶດຕິກຳ ຫຼື ການເຄື່ອນໄຫວວຽກງານຫຼັກຊັບທີ່ໄດ້ມີການພັດທະນາໃໝ່ ໃນແຕ່ລະໄລຍະ. ສຳລັບປີ 2026, ສຄຄຊ ມີແຜນທີ່ຈະສືບຕໍ່ສ້າງ ແລະ ປັບປຸງນິຕິກຳໃໝ່ໃຫ້ສຳເລັດຈຳນວນ 5 ສະບັບ ເພື່ອຮອງຮັບການເຕີບໂຕຂອງຕະຫຼາດທຶນ. ພ້ອມກັນນັ້ນ, ຈະໄດ້ຄົ້ນຄວ້າສ້າງເປັນນິຕິກຳ ກ່ຽວກັບເຄື່ອງແບບເຈົ້າໜ້າທີ່ ສືບສວນ-ສອບສວນ ຂອງວຽກງານຫຼັກຊັບໂດຍສະເພາະ. ຄຽງຄູ່ກັນນັ້ນ, ຈະສືບຕໍ່ໃນການປະກອບຄຳເຫັນ ແລະ ບັນຍາຍ ກ່ຽວກັບບັນດານິຕິກຳທີ່ກ່ຽວຂ້ອງ ແລະ ສັນຍາຕ່າງໆ ທີ່ປົ່ນອ້ອມວຽກງານມະຫາພາກ ແລະ ຕະຫຼາດທຶນ.

### 3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສືບຕໍ່ຊຸກຍູ້ ແລະ ຕິດຕາມການລາຍງານຂອງ ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບ ໃນການຄົ້ນຄວ້າຊອກຫາເປົ້າໝາຍບໍລິສັດຈົດທະບຽນ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ແຕ່ລະໄລຍະ, ສົມທົບກັບຕະຫຼາດຫຼັກຊັບລາວ, ຫ້ອງການກອງເລຂາຄະນະປະຕິຮູບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອກຳນົດ ແລະ ຊຸກຍູ້ບໍລິສັດເປົ້າໝາຍໃນການຈົດທະບຽນ ເປັນຕົ້ນ ເປົ້າໝາຍລັດວິສາຫະກິດ, ວິສາຫະກິດຂະໜາດກາງ ແລະ ນ້ອຍ ເພື່ອສ້າງແຜນວຽກລະອຽດໃນການຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ວິສາຫະກິດທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ແລະ ສືບຕໍ່ຕິດຕາມ, ວິເຄາະ, ຄົ້ນຄວ້າກ່ຽວກັບ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ສົມທົບກັບກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ໃນການຄົ້ນຄວ້າ ຮ່າງ ແຜນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານທາງການເງິນ (IFRS) ລະດັບມະຫາພາກ. ພ້ອມທັງ, ຄົ້ນຄວ້າປັບປຸງ ຄຳແນະນຳກ່ຽວກັບ ການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ (CG Scorecard).

### 3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ຈະສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບຢ່າງໃກ້ຊິດ ຜ່ານການຕິດຕາມສະພາບການເຄື່ອນໄຫວຊື້ຂາຍຫຼັກຊັບ, ການກວດກາທາງເອກະສານ ແລະ ການກວດກາກັບທີ່, ພ້ອມທັງຊຸກຍູ້ໃຫ້ ຕະຫຼາດຫຼັກຊັບຕິດຕາມສະພາບການເໜັງຕີງຂອງລາຄາຫຼັກຊັບ ຂອງບັນດາບໍລິສັດຈົດທະບຽນ, ການຊື້ຂາຍຫຼັກຊັບ ທີ່ບໍ່ຍຸດຕິທຳ, ການຝຶກອົບຮົມ ຍົກລະດັບຄວາມຮູ້ຂອງພະນັກງານ ແລະ ການປະຕິບັດຕາມພາລະບົດບາດຂອງຕົນ ຢ່າງມີປະສິດທິພາບ. ປີ 2025 ຍັງເປັນປີທີ່ມີຄວາມຄຶກຄັກ ແລະ ເປັນປີທີ່ນັກລົງທຶນສືບຕໍ່ເຄື່ອນໄຫວຊື້ຂາຍກັນຈຳນວນຫຼາຍ. ດັ່ງນັ້ນ, ສຄຄຊ ຈຶ່ງໄດ້ປະສານສົມທົບກັບ ຕລຊລ ໃນການຕິດຕາມກວດກາການເຄື່ອນໄຫວຊື້ຂາຍຫຼັກຊັບຢ່າງໃກ້ຊິດ ເພື່ອຮັບປະກັນຄວາມຍຸດຕິທຳ ແລະ ໂປ່ງໃສ ຄຽງຄູ່ກັບການຮັກສາຜົນປະໂຫຍດຂອງຜູ້ລົງທຶນ ໂດຍຕະຫຼອດໄລຍະປີ 2025 ສຄຄຊ ໄດ້ຕິດຕາມ ແລະ ລົງກວດການບັນດາຜູ້ມີສ່ວນຮ່ວມ ແລະ ຕະຫຼາດຫຼັກຊັບລາວ ຢ່າງໃກ້ຊິດ ເພື່ອເປັນການປົກປ້ອງຜູ້ລົງທຶນ ຄຽງຄູ່ກັບການທົບທວນບັນດາລະບຽບການເພື່ອໃຫ້ແທດເໝາະກັບສະພາບການໃນແຕ່ລະໄລຍະ ລວມທັງສົ່ງເສີມໃຫ້ເກີດມີການບໍລິການໃໝ່ໆ ເພື່ອຮອງຮັບຄວາມຕ້ອງການຂອງຜູ້ລົງທຶນເຊັ່ນ: ຊຸກຍູ້ໃຫ້ເກີດການບໍລິການຊື້ຂາຍຫຼັກຊັບຜ່ານມືຖື ຫຼື Mobile Trading System (MTS) ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ທີ່ເຄື່ອນໄຫວຊື້ຂາຍຫຼັກຊັບ ໃນຕະຫຼາດຂັ້ນສອງ ໂດຍປະຈຸບັນແມ່ນມີຜູ້ໃຫ້ບໍລິການ 1 ລາຍຄື ບໍລິສັດຫຼັກຊັບ BCEL-KT ໂດຍໃຫ້ບໍລິການຜ່ານແອບພິເຄຊັນ BCEL ONE ພ້ອມທັງຄົ້ນຄວ້າຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງຂອງຖານຜູ້ລົງທຶນຮ່ວມກັບຜູ້ມີສ່ວນຮ່ວມ ລວມທັງການບໍລິການອື່ນໆທີ່ສາມາດອຳນວຍຄວາມສະດວກ ແລະ ສ້າງສະພາບຄ່ອງໃຫ້ເພີ່ມສູງຂຶ້ນໃນຕະຫຼາດຂັ້ນສອງ.

### 3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສືບຕໍ່ຊຸກຍູ້ການສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ກອງທຶນເພື່ອການລົງທຶນ ໃຫ້ໄດ້ຢ່າງໜ້ອຍ 1-2 ກອງທຶນ; ຄົ້ນຄວ້າພັດທະນາເຄື່ອງມືໃນການຄຸ້ມຄອງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ໃຫ້ໄດ້ຢ່າງໜ້ອຍ 1 ເຄື່ອງມື; ຊຸກຍູ້ການກະກຽມຫັນຈາກຊົມລົມປະເມີນມູນຄ່າຊັບສິນ ມາເປັນ ສະມາຄົມປະເມີນມູນຄ່າຊັບສິນ; ຊຸກຍູ້ການຈັດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ໄດ້ຢ່າງໜ້ອຍ 01 ຄັ້ງ; ຊຸກຍູ້ບໍລິສັດຫຼັກຊັບສ້າງບົດວິເຄາະຫຼັກຊັບໃຫ້ໄດ້ 01 ບົດ; ຄົ້ນຄວ້າຄວາມເປັນໄປໄດ້ໃນການພັດທະນາລະບົບການເປີດບັນຊີອອນລາຍ (Online Account); ໃຫ້ສຳເລັດ ການສ້າງບົດສຶກສາຄວາມເປັນໄປໄດ້ໃນການເຊື່ອມຕໍ່ບັນຊີຫຼັກຊັບກັບຫຼາຍທະນາຄານ (Multiple Bank Link) ຜ່ານລະບົບຂອງບໍລິສັດ LAPNET; ກະກຽມຄວາມພ້ອມໃນການປະເມີນຄວາມສ່ຽງແຫ່ງ

ຊາດ (NRA) ຂະແໜງຫຼັກຊັບ ໃນວຽກງານ AML; ສືບຕໍ່ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ສືບຕໍ່ຄົ້ນຄວ້າການຮັບຮອງ, ການຕໍ່ອາຍຸ ແລະ ຍົກເລີກ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ.

### 3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ສຄຄຊ ຈະສືບຕໍ່ໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດນິຕິກຳໃຫ້ເຂັ້ມງວດ ພ້ອມທັງສະກັດກັ້ນ ແລະ ແກ້ໄຂ ການລະເມີດລະບຽບກົດໝາຍ ໃຫ້ຫຼຸດລົງເທື່ອລະກ້າວ ດ້ວຍຮູບການສ້າງ ແລະ ປັບປຸງ ນິຕິກຳທີ່ກ່ຽວຂ້ອງ. ພ້ອມນີ້ ໃນປີ 2026, ສຄຄຊ ຈະສຸມໃສ່ຕິດຕາມການຈັດຕັ້ງປະຕິບັດ ຄຳຮ້ອງຟ້ອງ, ແຈ້ງຄວາມ ແລະ ຮ້ອງທຸກ ຈາກສັງຄົມ ຜ່ານ 3 ຊ່ອງທາງຫຼັກ ແລະ ຊ່ອງທາງອື່ນໆທີ່ກ່ຽວຂ້ອງກັບລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ຢ່າງເປັນປົກກະຕິ. ຈະເພີ່ມທະວີການຕິດຕາມບໍລິສັດທີ່ເຄື່ອນໄຫວນອກວັດຖຸປະສົງ. ພ້ອມທັງ, ຕິດຕາມກວດກາການລະເມີດກົດໝາຍ ແລະ ລະບຽບການໃນຂົງເຂດຫຼັກຊັບ ເພື່ອປະຕິບັດມາດຕະການຢ່າງເຂັ້ມງວດ. ນອກຈາກນັ້ນ, ຍັງຈະສືບຕໍ່ຕິດຕາມການຊຳລະຄ່າປັບໃໝຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໃຫ້ຄົບຖ້ວນຕາມສັນຍາ (ເດືອນລະ 5 ລ້ານກີບ). ນອກນັ້ນ, ຈະເພີ່ມທະວີໃນການໂຄສະນາເຜີຍແຜ່ ໃຫ້ມວນຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ລະບຽບກົດໝາຍດັ່ງກ່າວ ໃນຂົງເຂດວຽກງານຫຼັກຊັບ ແລະ ຂົງເຂດກ່ຽວຂ້ອງທີ່ປິ່ນອ້ອມກັບວຽກງານຫຼັກຊັບ. ພ້ອມທັງ, ເອົາໃຈໃສ່ຕິດຕາມ ຜ່ານຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຂຶ້ນກວ່າເກົ່າ.

### 3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຂອງ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສົມທົບກັບຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ພາກສ່ວນກ່ຽວຂ້ອງ ພາຍໃນປີ 2026 ສຄຄຊ ຈະໄດ້ສຸມໃສ່ ຈັດຝຶກອົບຮົມກ່ຽວກັບວຽກງານຫຼັກຊັບ ໃນຈຳນວນ 7 ຫົວຂໍ້ /10 ຄັ້ງ ຊຶ່ງຄາດຄະເນຜູ້ເຂົ້າຮ່ວມຈຳນວນ 880 ຄົນ ມີຫົວຂໍ້ຄື: 1) ບັນດາຫຼັກການຂອງການປະເມີນມູນຄ່າທຸລະກິດ (Business Valuation); 2) ແບບຈຳລອງທາງການເງິນ (Financial Modeling); 3) ການລົງທຶນໃນຫຼັກຊັບປະເພດໜີ້ (Fixed income investment Analysis); 4) ທົບທວນບັນດາລະບຽບການທີ່ຕິດພັນກັບນັກວິຊາຊີບທຸລະກິດຫຼັກຊັບ (Refreshment); 5) ຫຼັກສູດສຳລັບຜູ້ບໍລິຫານທີ່ມີຄຸນນະພາບ ຄັ້ງທີ 5 ຫຼື 5th Board Leadership Program (5th BLP); 6) ຄວາມຮູ້ພື້ນຖານກ່ຽວກັບການລົງທຶນໃນຮຸ້ນ; 7) ການລົງທຶນແບບ DCA (Dollar-Cost Averaging) VS ການລົງທຶນແບບ VA (Value Averaging);ສຸມໃສ່ການຈັດຕັ້ງເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ ໃຫ້ໄດ້ທັງໝົດ 16 ຄັ້ງ, ຊຶ່ງຄາດຄະເນຜູ້ເຂົ້າຮ່ວມ ຈຳນວນ 1520 ຄົນ ໂດຍແນ່ໃສ່ເປົ້າໝາຍຄື 1) ພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງ; 2) ສະຖາບັນການສຶກສາໃນນະຄອນຫຼວງວຽງຈັນ; 3) ຈັດທັດສະນະສຶກສາໃຫ້ສະຖາບັນການສຶກສາຢູ່ສຳນັກງານ ຄຄຊ ແລະ ຕລຊລ; 4) ເຜີຍແຜ່ໃຫ້ບໍລິສັດຈົດທະບຽນ; 5) ເຜີຍແຜ່ໃຫ້ບໍລິສັດເປົ້າໝາຍຈົດທະບຽນ; 6) ເຜີຍແຜ່ໃຫ້ສະຖາບັນສື່ກາງທາງດ້ານຫຼັກຊັບ. ເອົາໃຈໃສ່ການໂຄສະນາຜ່ານສື່ສັງຄົມອອນລາຍ ທີ່ສັງຄົມສາມາດເຂົ້າເຖິງຂໍ້ມູນໄດ້ງ່າຍ ເປັນຕົ້ນແມ່ນ ເພຈ ເຟສບຸກ (ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ) ແລະ ຢູທູບ (LSCO ສຳນັກງານ ຄຄຊ) ໂດຍເປົ້າໝາຍຫຼັກກໍຄື ພາບ ແລະ ຂ່າວ ການເຄື່ອນໄຫວວຽກງານຂອງສຳນັກງານ ແລະ ສື່ໂຄສະນາ ແລະ ປະຊາສຳພັນ (ສາລະຕະຫຼາດທຶນ, ວິດີໂອ Podcast, ກະຕູນສັ້ນ (Animation), ແຜ່ນພາບສະແດງຂໍ້ມູນ Infographic ແລະ ອື່ນໆ). ໂຄສະນາທາງວິທະຍຸກະຈາຍສຽງແຫ່ງຊາດລາວ 103.7 MHz ຜ່ານລາຍການ “ຂັບຂີ່ປອດໄພ” ແລະ ລາຍການ “ລາຍການ ເພື່ອນທະນາຄານ”. ພ້ອມນັ້ນ, ກໍ່ຈະໄດ້ສືບຕໍ່ເຂົ້າຮ່ວມຕັ້ງບູດໂຄສະນາ ແລະ ວາງສະແດງກ່ຽວກັບວຽກງານຫຼັກຊັບ (Gateway, Money Expo). ພ້ອມທັງ, ເອົາໃຈໃສ່ ຄົ້ນຄວ້າກ່ຽວກັບການສ້າງຕັ້ງສູນໃຫ້ຄວາມຮູ້ວຽກງານຕະຫຼາດທຶນ ຮ່ວມກັບ ກົມຈັດຕັ້ງແລະພະນັກງານ, ສະຖາບັນການທະນາຄານ ແລະ ຕະຫຼາດຫຼັກຊັບລາວ.

### 3.7 ການຮ່ວມມືສາກົນ

ສຄຄຊ ຈະສືບຕໍ່ເພີ່ມທະວີການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ທັງພາກພື້ນ ແລະ ສາກົນ ໃຫ້ເຂົ້າສູ່ລວງກວ້າງ ແລະ ລວງເລິກ ເພື່ອພັດທະນາວຽກງານຕະຫຼາດທຶນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ກ້າວສູ່ມາດຖານສາກົນເທື່ອລະກ້າວ ເປັນຕົ້ນແມ່ນ: ສືບຕໍ່ ຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍ ກັບປະເທດເພື່ອນມິດຍຸດທະສາດ ແລະ ຂະຫຍາຍການຮ່ວມມືສອງຝ່າຍ ເປັນຕົ້ນແມ່ນ: ຄຄຊ ສປ. ຈີນ, ຄຄຊ ສສ.ຫວຽດນາມ, ກລຕ ໄທ, ຄຄຊ ກຳປູເຈຍ, ຄຄຊ ສ. ເກົາຫຼີ, ຄຄຊ ຍີ່ປຸ່ນ, CPA Australia, IOD ໄທ, ຕະຫຼາດຫຼັກຊັບໄທ, ລັດຖະບານລຸກຊຳບວກ; ຄົ້ນຄວ້າສະເໜີຈັດຕັ້ງກອງປະຊຸມປະຈຳປີ ຮ່ວມກັບ ສສ. ຫວຽດນາມ, ກຳປູເຈຍ ແລະ ອື່ນໆ; ສືບຕໍ່ ສ້າງສາຍພົວພັນຮ່ວມຫຼາຍຝ່າຍ ໂດຍການຍາດແຍ່ງການຊ່ວຍເຫຼືອວຽກງານຕ່າງໆ ໃນການຮ່ວມມືໃນຂອບອາຊຽນ ເຊັ່ນ: ACMF, WC-CMD ແລະ ABMF ພ້ອມທັງ ຄົ້ນຄວ້າຄວາມເປັນໄປໄດ້ ໃນການຈັດຕັ້ງປະຕິບັດໂຄງການເຊື່ອມໂຍງຕ່າງໆ ໃນຂອບຕະຫຼາດທຶນອາຊຽນ; ສືບຕໍ່ ສະເໜີຂໍການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນຮອນ ໃນການສືບຕໍ່ໂຄງການສະໜັບສະໜູນການຮ່ວມມື 03 ຝ່າຍ ໃນຂະແໜງການຕະຫຼາດທຶນຂອງ ສປປ ລາວ, ສສ. ຫວຽດນາມ ແລະ ລຸກຊຳບວກ (Lao/032); ສືບຕໍ່ ເຮັດວຽກຮ່ວມກັບຄະນະກຳມະການທົບທວນຄວາມສອດຄ່ອງຂອງ IOSCO (Screening Group) ກ່ຽວກັບການສະເໜີເຂົ້າເປັນສະມາຊິກສົມບູນຂອງ IOSCO ຂອງ ສຄຄຊ ແລະ ສືບຕໍ່ ການຮ່ວມມື ແລະ ການຂໍການຊ່ວຍເຫຼືອ ຈາກບັນດາອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນແມ່ນ: ທະນາຄານພັດທະນາອາຊີ (ADB), ອົງການການເງິນສາກົນ (IFC), ທະນາຄານໂລກ (WB) ແລະ ສະຖາບັນການເຕີບໂຕສີຂຽວ (GGGI) ເພື່ອພັດທະນາວຽກງານການບັນຊີ, ຕະຫຼາດຮຸ້ນກູ້ ຂອງ ສປປ ລາວ ແລະ ວຽກງານຕະຫຼາດທຶນຕ່າງໆ ພ້ອມທັງ, ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆທີ່ຕິດພັນ.

## <u>ຂໍ້ມູນຕິດຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)</u>



ທີ່ຕັ້ງສຳນັກງານ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.
PO. Box: 19
Phone: (856-21) 217 770
Fax: (856-21) 217 806
E-mail: lsco@lsc.gov.la
Website: www.lsc.gov.la
ໂທລະສັບສາຍດ່ວນ: 1602
Facebook: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
Youtube: ລາຍການ "ເສັ້ນທາງສູ່ຕະຫຼາດທຶນລາວ".